<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2008 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1- 4
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 5 - 7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lessons 5 - 7
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 8 - 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8 - 10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11 - 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11 - 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດແນະນຳຄູສອນ

## ບົດຮຽນທີ 1

## ຈົ່ງເຂົ້າແຖວໃນແຜນການຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 1:1-14

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ ບົດທີ 1

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າໄດ້ຮຽກເອີ້ນ ພວກເຮົາໃຫ້ມີສ່ວນຮ່ວມໃນແຜນການທີ່ພຣະອົງໄດ້ຕັ້ງໄວ້ແລ້ວໃນພຣະຄຣິດ ເພື່ອທຸກຄົນຈະໄດ້ຮັບຄວາມຊື່ນຊົມຍິນດີໃນພຣະພອນທີ່ຈະມາສູ່ຄອບຄົວຂອງພຣະເຈົ້າ

**ຄຳຖາມເພື່ອການຄົ້ນຄວ້າ:** ໃນພຣະເຢຊູ, ພຣະເຈົ້າໄດ້ກະທຳການຢ່າງໃດເພື່ອພວກເຮົາແດ່? ເປັນຫຍັງພຣະອົງຈຶ່ງກະທຳການຢ່າງນີ້?

**ຈຸດປະສົງຂອງບົດຮຽນ:** ເພື່ອຢາກໃຫ້ທຸກຄົນເຂົ້າໃນແຜນການຂອງພຣະເຈົ້າ ແລະມີຄວາມຮັບຜິດຊອບຕໍ່ແຜນການນັ້ນ.

### ຄົ້ນຄວ້າພ້ອມກັບການປະຕິບັດ

- ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ປະຕິບັດຄວາມຮັກ ເພື່ອຄົນອື່ນຈະໄດ້ເຫັນພຣະເຢຊູໃນຄວາມຮັກນັ້ນ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃຫ້ເລີ້ມຕົ້ນດ້ວຍການນຈົດຫມາຍສອງສະບັບມາວາງໄວ້ຫນ້າໂຕະ. ສະບັບນຶ່ງໃຫ້ເປັນຈົດຫມາຍທີ່ຂຽນເຖິງຕົວທ່ານເອງໂດຍສະເພາະ, ແລະອີກສະບັບນຶ່ງແມ່ນຂຽນຫາຜູ້ກວດກາຫນັງສື ໃຫ້ມີຫນັງສືພິມດ້ວຍຍິ່ງດີ. ບອກຫ້ອງຮຽນໃຫ້ຮູ້, ໂດຍທົ່ວໄປແລ້ວພວກເຮົາສາມາດອ່ານຫນັງສືນີ້ໄດ້ຢູ່, ເຖິງແມ່ນວ່າຈະດົນນານເປັນປີໆແລ້ວກໍຕາມ. ບາງຄັ້ງຈົດຫມາຍຈະຂຽນໄປເຖິງກຸ່ມນ້ອຍໆ ແຕ່ແລ້ວຈົດຫມາຍກໍມີຄວາມຫມາຍໄປເຖິງຄົນກຸ່ມໃຫຍ່ໄດ້. ຈົດຫມາຍຂອງໂປໂລ, ເພິ່ນຕັ້ງໃຈສົ່ງໄປໃຫ້ຄຣິສຕະຈັກນ້ອຍໆ, ມີເຫດການສະເພາະເຈາະຈົງ, ແລະສົ່ງຕໍ່ກັນໄປ, ໂບດຕໍ່ໂບດ ໃຫ້ຮັບຮູ້ນຳກັນ. ເຊັ່ນຈົດຫມາຍສະບັບນີ້ ໂປໂລຕັ້ງໃຈຈະສົ່ງໄປຫາຄຣິສຕະຈັກເມືອງເອເຟໂຊ ( ປັດຈຸບັນນີ້ກາຍເປັນປະເທດເຕີກີ້ແລ້ວ.) ແຕ່ຈົດຫມາຍນີ້ກໍຍັງຂຽນໄປຫາໂບດເຫມືອນເດີມ.

### ນຳພາສຶກສາພຣະຄັມພີ

2. ອະທິບາຍໃຫ້ຫ້ອງຮຽນເຂົ້າໃຈເຖິງຈົດຫມາຍຂອງໂປໂລວ່າ ຂໍ້ 1-3 ເພິ່ນໄດ້ແນະນຳຕົວຂອງເພິ່ນເອງ, ແນະນຳພຣະເຢຊູຄຣິດ, ແນະນຳພຣະເຈົ້າ.

   = ໃຫ້ນັກຮຽນຄົນນຶ່ງອ່ານ ເອເຟໂຊ 3:1-3 ອ່ານຊ້າໆ ແລ້ວຄູຈະວາງຄຳຖາມດັ່ງຕໍ່ໄປນີ້:

= ໂປໂລແນະນຳຕົວເອງວ່າຢ່າງໃດ?

= ໂປໂລແນະນຳພຣະເຈົ້າວ່າຢ່າງໃດ?

= ໂປໂລມີຄວາມຄິດຢ່າງ ທີ່ເພິ່ນກ່າວຄຳວ່າ "ພຣະພອນ" ນີ້ ໃນຂໍ້ທີ 3

3. ໃຫ້ສອງຫລືສາມຄົນອ່ານ ຂໍ້ 4-12. ໃນຂນະທີ່ຟັງຢູ່ນັ້ນ ໃຫ້ນັກຮຽນຄິດໄວ້ວ່າຈຸດໃດທີ່ໂປໂລເນັ້ນຫນັກໃສ່ພວກເຮົາ ແລະຈຸດໃດທີ່ໂປໂລເນັ້ນຫນັກໃສ່ພຣະເຈົ້າ? ຫລັງຈາກອ່ານແລ້ວໃຫ້ນັກຮຽນໃຫ້ຄຳເຫັນ ແຕ່ລະຂໍ້ໆໄປ.

4. ໃຫ້ສົນທະນາຂໍ້ຄວາມຕໍ່ໄປນີ້: ໂດຍອີງໃສ່ເຈັ້ຍບົດຮຽນ.

**ຖືກຮັບເອົາ:** ເປັນຫຍັງພວກເຮົາຈຶ່ງຖືກຮັບເອົາໂດຍພຣະເຈົ້າ ແມ່ນພຣະພອນ. "ການຈັດຕຽມ"

**ການໄຖ່ຖອນ:** ເປັນຫຍັງຈຶ່ງວ່າການໄຖ່ຖອນແມ່ນພຣະພອນ? "ການຈັດຕຽມ"

**ການອະພັຍໂທດ:** ຖ້າຄວາມບາບຫາກຖືກຍົກອອກ ຊີວິດຂອງພວກເຮົາຈະເປັນຢ່າງໃດ? "ການຈັດຕຽມ"

**ຄວາມເລິກລັບ:** ໃນຂໍ້ 9 ນີ້ ພວກເຮົາຈະສາມາດເວົ້າຢ່າງໃດ ທີ່ເຫັນວ່າດີກວ່າປໂຍກນີ້ອີກ?

5. ຍອມຮັບຮູ້ວ່າ ພວກເຮົາເຂົ້າໃຈຍາກກ່ຽວກັບການຊົງເລືອກ (ດັ່ງໃນຂໍ້ທີ 4) ແລະ ກ່ຽວກັບການໃກ້ຈະເຖິງຈຸດສຸດທ້າຍ (ຂໍ້ທີ 11) ຈຶ່ງຮ່ວມກັນພິຈາຣະນາຫົວຂໍ້ສັ້ນໆນີ້ດ້ວຍກັນ "ການຊົງເລືອກ"

6. ເຊີນຄົນນຶ່ງອ່ານ ຂໍ້ 13-14 ດັງໆ

7, ເວົ້າເຣື່ອງນີ້ໃຫ້ຟັງ: ນາງ ອາແມນດ້າ ກົ້ມຫນ້າເບິ່ງແຫວນຫມັ້ນທີ່ງາມແລະມີຣາຄາຂອງລາວ. ເຫມືອນກັບຄູ່ຮັກຂອງລາວຈະເວົ້າກັບລາວວ່າ "ອ້າຍຈະຮັກແຕ່ນ້ອງພຽງຄົນດຽວ ແລະຈະບໍ່ມີຜູ້ອື່ນອີກຕໍ່ໄປ" ນອກເຫນືອໄປກວ່ານັ້ນ ຍັງເປັນເຄື່ອງຫມາຍອີກວ່າ ວັນນຶ່ງຂ້າງຫນ້າລາວຈະຕ້ອງເປັນເມັຍເຂົາ ດ້ວຍຄວາມເຕັມໃຈແລະຖວາຍຕົວ.

8. ແຫວນຫມັ້ນນັ້ນກໍຄືການປະທັບຕາ, ພຣະວິນຍານບໍຣິສຸດໄດ້ປະທັບຕາ ພວກເຮົາເອົາໄວ້ແລ້ວ. ໃຫ້ເບິ່ງໃນເຈັ້ຍບົດຮຽນ, ກ່ຽວກັບການປະທັບຕາຂອງພຣະວິນຍານບໍຣິສຸດ.

## <u>ການນຳໃຊ້ໃນຊີວິດປະຈຳວັນ</u>

9. ຫມູນໃຈໃຫ້ນັກຮຽນທຸກຄົນຄິດເຖິງ: ປັດຈຸບັນ, ອະດີດ, ແລະອະນາຄົດ. ຄຣູຈະນຳພານັກຮຽນໂດຍກ່າວຫຍໍ້ໆໃນເອເຟໂຊ 1:1-14 ແລ້ວກໍຖາມ:

- ພຣະເຈົ້າໄດ້ກະທຳຫຍັງແດ່ໃຫ້ແກ່ພວກເຮົາ?
- ພຣະເຈົ້າກຳລັງກະທຳຫຍັງແດ່ໃຫ້ແກ່ພວກເຮົາ?
- ພຣະເຈົ້າຈະກະທຳຫຍັງແດ່ໃຫ້ແກ່ພວກເຮົາ?
- ເປັນຫຍັງເພິ່ນຈຶ່ງກະທຳເຊັ່ນນີ້? ພຣະເຈົ້າຊົງເລືອກພວກເຮົາໃຫ້ມາຢູ່ໃນຄອບຄົວຂອງພຣະອົງຫມາຍຄວາມວ່າຢ່າງໃດ?

10. ປິດດ້ວຍການອະທິຖານ. ອະທິຖານຂໍກຳລັງ, ອະທິຖານຂໍສະຕິປັນຍາ, ຂໍໃຫ້ເຂົ້າໃຈຂໍ້ເລິກລັບຂອງພຣະເຈົ້າ

*ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳຄູສອນ
## ບົດຮຽນທີ 2
## ພຣະເຈົ້າເຮັດໃຫ້ມີຄວາມແຕກຕ່າງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 2:1-10

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 2:1-10

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາສາມາດມີຄວາມຊື່ນຊົມຍິນດີທີ່ພຣະເຈົ້າເຮັດໃຫ້ມີການປ່ຽນແປງໃນຊີວິດຂອງພວກເຮົາໃນປັດຈຸບັນແລະຕລອດໄປໄດ້ ຖ້າເຮົາວາງໃຈໃນພຣະເຢຊູຄຣິດ.

**ຄຳຖາມເພື່ອສຳການຄົ້ນຄວ້າ:** ຖ້າວາງໃຈໃນພຣະຄຣິດແລ້ວ ຈະມີອັນໃດປ່ຽນແປງ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊີ້ແຈງໃຫ້ເຫັນວ່າ ຄວາມແຕກຕ່າງທີ່ພຣະເຈົ້າກະທຳໃນປັດຈຸບັນແລະຕລອດໄປນັ້ນ ແມ່ນພຣະອົງຊົງກະທຳໃນພຣະເຢຊູຄຣິດ.

**ຄົ້ນຄວ້າພ້ອມກັບການປະຕິບັດ**

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະ ໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

## ແຜນການສິດສອນ

### ນຳເຣື່ອງອງເຂົ້າສູ່ຊີວິດຈິງ

1. ຖາມນັກຮຽນເບິ່ງວ່າມີໃຜເຄີຍຕາຍແລ້ວຄືນມາບໍ່? ຄຳຕອບອາດຈະມີດັ່ງນີ້:
   ຕາຍແລ້ວເວລາຖືກຜ່າຕັດ ແລ້ວກໍຄືນມາໃຫມ່.
   ຖືກລາຍງານວ່າຕາຍແລ້ວໃນສນາມຮົບ, ແຕ່ແລ້ວກໍພົບຢູ່ບ່ອນໃດບ່ອນນຶ່ງໃນເວລາສົງຄາມສງົບລົງ.

2. ຄົນທີ່ຄືນມາຈາກຕາຍອາດຈະມີຫລາຍແບບ ຫລາຍວິທີການ, ທີ່ບໍ່ໄດ້ກ່າວໃນພຣະຄັມພີ. ຢ່າງໃດກໍແລ້ວແຕ່ໃນເອເຟໂຊ ບົດທີ 2, ໂປໂລໄດ້ກ່າວເຖິງຄວາມແຕກຕ່າງຣະຫວ່າງ "ການຕາຍໃນການຫລົງຜິດແລະໃນການເຮັດບາບ" ແລະ "ການຄືນມີຊີວິດ" ໃນພຣະຄຣິດ.

### ນຳພາການສຶກສາພຣະຄັມພີ:

3. ຂີດແບ່ງກະດານໃຫ້ເປັນສອງສ່ວນ ສ່ວນນຶ່ງໃຫ້ຂຽນຄຳວ່າ ຕາຍ ແລະອີກສ່ວນນຶ່ງໃຫ້ຂຽນຄຳວ່າ ຊີວິດ

4. ເຊີນໃຫ້ຄົນນຶ່ງອ່ານ ເອເຟໂຊ 2:1-3 ເມື່ອເວລາອ່ານຢູ່ນັ້ນ ຄຣູຈະສເນີໃຫ້ຟັງຄຳວ່າ "ຕາຍ" ແລ້ວກໍຂຽນໃສ່ກະ

ດານໄວ້.

5. ສົນທະນາ ຕາຍໃນການຫລົງຜິດ ແລະຕາຍໃນການບາບ ເພື່ອນັກຮຽນຈະໄດ້ເຂົ້າໃຈຄວາມໝາຍຢ່າງຄັກແນ່. ໃຫ້ເບິ່ງໃນເຈັ້ຍບົດຮຽນໄປດ້ວຍ.

6. ອະທິບາຍເພີ້ມ ຄວາມບາບທຳລາຍມະນຸດບໍ່? ອາດຈະໄດ້ຄຳຕອບວ່າ ທຳລາຍ. ຄຳຖາມຕໍ່ໄປ: ທຳລາຍຫຍັງແດ່? ຄຳຕອບ: ຄວາມສັມພັນ, ຄວາມຍິນດີ, ຄວາມມ່ວນຊື່ນ, ຄວາມຝັນ, ຄວາມຫວັງ.....
ເບິ່ງໃນພຣະຄັມພີ ແລະຟັງໃຫ້ດີໆ. ໃຫ້ຄົນນຶ່ງອ່ານອີກ. (2:1-3) ເປັນຫຍັງໂປໂລຈຶ່ງໃຊ້ຄຳວ່າ "ທ່ານທັງຫລາຍ" ແລະຄຳວ່າ "ພວກເຮົາທຸກຄົນ"

7. ໃຫ້ຄົນນຶ່ງອ່ານ ຂໍ້ 4-9 ຟັງໃຫ້ດີໆ ຄຳທີ່ສຳຄັນທີ່ສຸດໃນເວລານີ້ກໍຄືຄຳວ່າ "ບັນດານໃຫ້ເຮົາມີຊີວິດຢູ່ໃນພຣະຄຣິດ" ແລະ "ໃຫ້ເຮົາເປັນຄືນມາ" ຂຽນລົງໃນກະດານ.

8. <u>ແບ່ງຫ້ອງໃຫ້ເປັນສອງໝວດ ແລ້ວໃຫ້ຕອບຄຳຖາມຕໍ່ໄປນີ້:</u>
- ພຣະເຈົ້າໄດ້ກະທຳອັນໃດແດ່ໃຫ້ກັບພວກເຮົາ? ມີຄວາມໝາຍຢ່າງໃດສຳລັບພວກເຮົາ?
- ພຣະເຈົ້າຈະກະທຳສິ່ງໃດໃຫ້ແກ່ພວກເຮົາໃນອະນາຄົດ? ມີຄວາມໝາຍຢ່າງໃດສຳລັບພວກເຮົາ?

9. ຄຣູຈະອະທິບາຍວ່າ ພຣະເຈົ້າໄດ້ປະທານພຣະຄຸນໃຫ້ພວກເຮົາທຸກຄົນໃນອະດີດຜ່ານມາ ແລະໃນອະນາຄົດ ພຣະອົງຍັງຈະມີອີກຢ່າງຫລວງຫລາຍ. ໃນປັດຈຸບັນນີ້ເດ? ໃຫ້ອ່ານໃນຂໍ້ 10.

10. ເພື່ອເປັນການສົມທຽບ ໃຫ້ຄົນນຶ່ງອ່ານມັດທາຍ 5:16 ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງການກະທຳດີ ແລະພຣະຄຸນຂອງພຣະເຈົ້າ?

<u>ໜູນໃຈໃນການປະຕິບັດ</u>

11. = ທ້າວບຸນມາຮູ້ສຶກບໍ່ສະບາຍໃຈໃນຊີວິດທີ່ຜ່ານມາ ໃຫ້ຊອກຫາຄຳເວົ້າທີ່ໜູນໃຈລາວ.
= ນາງແຈນຢາກຮູ້ຈັກກັບພຣະເຈົ້າ ລາວບໍ່ຮູ້ວ່າຈະເຮັດຢ່າງໃດ ຈະເດີນທາງເສັ້ນໃດຈຶ່ງຈະເຖິງພຣະເຈົ້າ? ໃຫ້ຊອກຫາຂໍ້ພຣະຄັມພີທີ່ສາມາດຊ່ວຍລາວດ້ວຍ.
= ທ້າວຈິງ ພະຍາຍາມກະທຳດີ ຊ່ວຍຜູ້ອື່ນ ແລະເວົ້າວ່າ : ທີ່ຂ້ອຍເຮັດນີ້ ກໍແມ່ນເຮັດເພື່ອພຣະເຈົ້າ. ທ້າວຈິງເຮັດຖືກແລ້ວບໍ່? ມີຂໍ້ພຣະຄັມພີໃດບໍ່ທີ່ຈະຊ່ວຍລາວໄດ້?

12. ອະທິຖານຂອບພຣະຄຸນພຣະເຈົ້າ ໃນພຣະຄຸນອັນເຫລືອລົ້ນພົ້ນປະມານຢ່າງນີ້. ໃຫ້ທຸກຄົນຮັບເອົາພຣະຄຸນຊຶ່ງພຣະເຈົ້າໄດ້ປະທານໃຫ້.

*ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳຄຣູສອນ
# ບົດຮຽນທີ 3
# ຈົ່ງເຮັດໃຫ້ທຸກຄົນເຂົ້າຢູ່ໃນຄອບຄົວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 2:11-22

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 2:11-22

**ຈຸດສຳຄັນຂອງບົດຮຽນນີ້:** ໃນພຣະເຢຊູຄຣິດ ພຣະເຈົ້າໄດ້ຊົງເຮັດໃຫ້ພວກເຮົາຢູ່ຮ່ວມກັນດ້ວຍການປະສົມປະສານ ແລະດ້ວຍສັນຕິສຸກທີ່ມາຈາກຄວາມເປັນອັນນຶ່ງອັນດຽວກັນ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງຄຣິສຕຽນບັບຕິສຈຶ່ງມີການລົ້ມເຫລວ ໃນການປະສົມປະສານງານ, ລົ້ມເຫລວໃນການຮັບສັນຕິສຸກທີ່ພຣະເຈົ້າມອບໃຫ້ໃນພຣະຄຣິດ, ແລະພວກເຮົາຈະແກ້ໄຂຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊີ້ໃຫ້ເຫັນວ່າຄວາມເປັນອັນດຽວກັນທີ່ພຣະເຈົ້າມອບໃຫ້ໃນພຣະເຢຊູຄຣິດເປັນທາງດຽວເທົ່ານັ້ນໃນປັດຈຸບັນນີ້.

### ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ໃຫ້ນັກຮຽນຕອບຄຳຖາມໃນໃຈວ່າ ຖືກຫລືຜິດ. ຫລືວ່າຢາກຈະພິມເປັນເຈັ້ຍ ແລ້ວກໍໃຫ້ນັກຮຽນຕອບໃສ່ທາງໜ້າເອົາກໍໄດ້.
   ------ໃນເມືອງທີ່ຂ້າພະເຈົ້າຢູ່ມີການຂັດແຍ້ງກັນຣະຫວ່າງຜົວພັນແລະສັນຊາດ.
   ------ໃນຄຣິສຕະຈັກຂອງຂ້າພະເຈົ້າມີການກີດກັ້ນຣະຫວ່າງຜູ້ຊາຍແລະຜູ້ຍິງ.
   ------ໃນຄອບຄົວຂອງຂ້າພະເຈົ້າຍັງມີການບໍ່ລົງຮອຍກັນ.
   ------ໃນປະເທດຂອງຂ້າພະເຈົ້າຍັງມີການແຍກຊັ້ນວັນນະຣະຫວ່າງຄົນທຸກກັບຄົນຮັ່ງ.

2. ບອກນັກຮຽນວ່າ ຖ້າຜູ້ໃດຫາກໝາຍສອງອັນຈະເປັນເຄື່ອງໝາຍຫລືຄິດໃນໃຈກໍຕາມ ທ່ານຕ້ອງເຂົ້າໃຈແດ່ຈັກໜ້ອຍກ່ຽວກັບຄົນຍິວແລະຄົນຕ່າງຊາດ. ຄຣິສຕຽນຈຳຕ້ອງປະເຊີນກັບຈົດໝາຍທີ່ໂປໂລຂຽນມາເຖິງຊາວເອເຟໂຊນີ້. ຈຸດປະສົງຂອງລາວກໍແມ່ນຕ້ອງການຢາກເຫັນຄວາມເປັນອັນນຶ່ງອັນ ດຽວກັນເກີດຂຶ້ນ.

### ສຶກສາພຣະຄັມພີ

3. ເຊີນຄົນນຶ່ງອ່ານ ເອເຟໂຊ 2:11-12. ແມ່ນຫຍັງຄືສິ່ງທີ່ແບ່ງແຍກຄົນຢິວແລະຄົນຕ່າງຊາດ ກ່ອນທີ່ພວກເຂົາຈະມາພົບຄວາມລອດພົ້ນໃນພຣະຄຣິດ?

4. ກ່າວຫຍໍ້ໆໃນເຈັ້ຍບົດຮຽນ ທີ່ກ່າວເຖິງການແບ່ງແຍກໃນຄຣິສຕະຈັກ. ສິ່ງທີ່ບໍ່ລົງຮອຍກັນ ແລະການຄືນດີກັນ ຫລັງຈາກນັ້ນກໍກ່າວເຖິງກົດບັນຍັດພໍໃຫ້ເຂົ້າໃຈ.

5. ໃຫ້ຄົນນຶ່ງອ່ານພຣະຄັມພີ ຂໍ້ 13-16 ໃນຂະນະທີ່ທຸກຄົນກຳລັງຟັງຢູ່ ໃຫ້ສັງເກດວ່າຄົນສອງພວກນີ້ຈະມີການຄືນດີກັນໄດ້ຢ່າງໃດ. ຫລັງຈາກອ່ານແລ້ວກໍຂໍໃຫ້ໃຜຜູ້ນຶ່ງທີ່ເກັບກຳໄດ້ກ່າວເຣື່ອງ. ຄຣູຈະເປັນຜູ້ເນັ້ນວ່າພຣະເຢຊູເປັນຜູ້ກະທຳໃຫ້ທຸກສິ່ງທຸກຢ່າງຄືນດີກັນໄດ້. ໃຫ້ເບິ່ງຂໍ້ທີ 14.

6. ໃຫ້ອ່ານຂໍ້ທີ 17-22 ໂດຍອີງໃສ່ຂໍ້ພຣະຄັມພີ ຄຣູຈະວາງຄຳຖາມ:

- ການສອນຂອງພຣະເຢຊູກ່ຽວກັບສັນຕິສຸກ ພຣະອົງຊົງເລັງໃສ່ພວກໃດ ? ພວກຢິວຫລືຄົນຕ່າງຊາດ?
- ໃຜເປັນຜູ້ທີ່ໄດ້ຮັບຜົນປໂຍດຫລາຍກວ່າ?
- ແມ່ນໃຜເປັນຜູ້ທີ່ມີສ່ວນຮ່ວມກັບຄອບຄົວຂອງພຣະເຈົ້າຢ່າງແທ້ຈິງ?
- ໃຜເປັນຜູ້ທີ່ມີໂອກາດທີ່ຈະຈະເຣີນຂຶ້ນໃນພຣະເຈົ້າ?

(ຄຳຕອບແຕ່ລະຂໍ້ ແມ່ນທັງສອງຝ່າຍໄດ້ຮັບຜົນປໂຍດເທົ່າກັນ)

7. ຊີ້ແຈງເຖິງຮູບພາບຂອງຄຣິສຕະຈັກ ອະທິບາຍເຖິງຮູບພາບນີ້ ຂໍ້ 20-22. ນຳພານັກຮຽນເຂົ້າໃຈວ່າການຊົງສ້າງຄຣິສຕະຈັກແລະການສ້າງອາຄານ

**<u>ຄຳຫນູນໃຈສຳລັບວັນນີ້:</u>**

8. ຄົນຫນຸ່ມຄົນນຶ່ງໃຊ້ເວລາຢູ່ຫລັງກຳແພງຂອງຕຶກໃຫຍ່ຫລັງນຶ່ງ ລາວໄດ້ຍິນສຽງຫົວ, ສຽງຮ້ອງເພັງ, ແລະສຽງທີ່ພວກເຂົາມາກິນເຂົ້າຮ່ວມກັນທີ່ຫລັງບ້ານ. ເວລາລາວຢຶດເບິ່ງລາວກໍສັງເກດເຫັນວ່າ ພໍ່ກຳລັງອ້າແຂນກອດເອົາລູກ. ຊາວຫນຸ່ມຄົນນັ້ນຄິດໃນໃຈວ່າ ຂ້ອຍຢາກໃຫ້ຄອບຄົວຂອງຂ້ອຍເປັນຢ່າງນັ້ນເດ້. ມື້ນຶ່ງລາວຍ່າງອ້ອມໆ ໄປທາງຂ້າງຫນ້າຂອງຕຶກໃຫຍ່ນັ້ນ ລາວຈຶ່ງຮູ້ວ່າບໍ່ມີກຳແພງ. ທຸກຄົນທີ່ຢາກ ຢູ່ເຂດນັ້ນກໍສາມາດຢູ່ໄດ້. ຄຳຖາມ:

- ຄົນຫນຸ່ມຄົນນີ້ ໃຊ້ເວລາເປັນປີໆຈຶ່ງເຫັນທາງເຂົ້າໄປໃນບ້ານຫລັງນີ້ໄດ້. ເປັນຫຍັງລາວຈຶ່ງຕ້ອງໃຊ້ເວລາດົນນານແທ້?
- ໃຜຈະເປັນຜູ້ຮັບຜິດຊອບທີ່ຈະອະນຸຍາດໃຫ້ລາວເຂົ້າມາ? ລາວຈະເຂົ້າມາທາງໃດ?
- ໃຜເປັນຜູ້ສ້າງກຳແພງຫລັງຕຶກນັ້ນ?
- ບາງຄັ້ງຄຣິສຕຽນກໍໄດ້ກໍ່ສ້າງກຳແພງກັ້ນຕົນເອງ, ກຳແພງເຫລົ່ານັ້ນສ້າງດ້ວຍຫຍັງ?
- ເວລາທ່ານອ່ານພຣະຄັມພີໃນວັນນີ້ແລ້ວ, ແມ່ນໃຜເປັນຜູ້ຫາທາງທຳລາຍກຳແພງນີ້ລົງ? ແລະແມ່ນໃຜເປັນຜູ້ຢາກໃຫ້ມີຄວາມເປັນອັນນຶ່ງອັນດຽວກັນ?
- ອີງໃສ່ຂໍ້ຄວາມເຫລົ່ານີ້ແລ້ວ, ແມ່ນຫຍັງທີ່ພວກເຮົາຄວນກະທຳ ເພື່ອຈະຢູ່ຮ່ວມກັນດ້ວຍສັນຕິສຸກແລະເປັນອັນນຶ່ງອັນດຽວກັນ?

9. ອະທິຖານຂໍສະຕິປັນຍາຈາກພຣະເຈົ້າ ຂໍໃຫ້ມີສັນຕິສຸກ ແລະມີຄວາມເປັນອັນນຶ່ງອັນດຽວກັນ

*ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນໍາຄຣູສອນ
# ບົດຮຽນທີ 4
# ຈົ່ງເປີດໃຈຮັບຄວາມສົມບູນຈາກພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເອເຟໂຊ 3:14-21

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 3:14-21

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຕ້ອງເປີດໃຈຮັບເອົາກໍາລັງອັນເຂັ້ມແຂງຂອງພຣະເຈົ້າແລະໃຫ້ຄວາມຮັກຂອງພຣະອົງເຈົ້າມາຢູ່ໃນຈິດໃຈຂອງພວກເຮົາ.

**ຄໍາຖາມເພື່ອການຄົ້ນຄວ້າ:** ທ່ານເຄີຍຫວັງຈະໄດ້ຮັບຄວາມເຂັ້ມແຂງຝ່າຍວິນຍານຈິດ ແລະຢູ່ໃກ້ໆ ກັບພຣະເຢຊູຄຣິດຫລືບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ພິຈາຣະນາໃນກໍາລັງອັນເຂັ້ມແຂງຝ່າຍຈິດໃຈ ແລະຈະໄດ້ເປີດຕົວເອງໃຫ້ຮັບເອົາທຸກຢ່າງທີ່ພຣະເຈົ້າມີເພື່ອພວກເຮົາ.

## ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າ ພຣະຄັມພີມີອໍານາດໃນການນໍາພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າ ພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

## ແຜນການສິດສອນ

**ນໍາເຣື່ອງເຂົ້າສູ່ຊີວິດຈິງ:**

1. ຄໍາຖາມ: ທ່ານເຄີຍດີໃຈບໍ່ທີ່ເປັນໃຜຜູ້ນຶ່ງ (ຄົນໜຸ່ມ) ສະແດງຄວາມສາມາດຂອງເຂົາຢູ່ຕໍ່ໜ້າຝູງຊົນຈໍານວນຫລວງຫລາຍ?
   =ຊາວໜຸ່ມຂີ້ອາຍຄົນນຶ່ງກ້າວຂາອອກມາພ້ອມກັບ ແກ ຄູ່ຊີບ ເພື່ອຈະສແດງໃຫ້ຄົນເປັນຈໍານວນຫລວງຫລາຍຫລາຍໄດ້ຊົມ.
   =ຄິດເຖິງວິທະຍາລັຍນ້ອຍໆແຫ່ງນຶ່ງທີ່ຂ້ອນຂ້າງຈະນ້ອຍເກີນໄປສໍາລັບທີມກິລາ, ແຕ່ວ່າລີລາການຫລິ້ນ ແມ່ນບໍ່ນ້ອຍໜ້າໄປກວ່າມະຫາວິທະຍາລັຍທີ່ໃຫຍ່.
   =ຄິດເຖິງຄົນໆນຶ່ງ ທີ່ມີຄວາມໂສກເສົ້າຫລາຍ, ແຕ່ລາວກໍສາມາດກ້າວເດີນໄປຢ່າງບໍ່ຢຸດຢັ້ງ ລາວກ້າຮ້ອງເພງໃນຄະນະນັກຮ້ອງຂອງໂບດ ດ້ວຍໃບໜ້າອັນຍິ້ມແຍ້ມແຈ່ມໃສຂອງລາວຕລອດເວລາ. ມີຫຍັງອີກແດ່ບໍ່ທີ່ທ່ານຄິດໄດ້ ທີ່ພວກເຮົາຈະກ້າວໄປສູ່ຄວາມຫວັງໃໝ່, ພລັງໃໝ່.....?

໒. ຫລັງຈາກທີ່ປ່ອຍໃຫ້ນັກຮຽນໄດ້ກ່າວຕາມຄວາມຄິດເຫັນແລ້ວ. ໃຫ້ອ່ານຈຸດປະສົງຂອງບົດຮຽນທີ່ຢູ່ຂ້າງເທິງນີ້. ຫນູນໃຈໃຫ້ນັກຮຽນຖອດຖອນເອົາບົດຮຽນຈາກໂປໂລ ວ່າການເຮັດໃຫ້ມີຄວາມເຂັ້ມແຂງຝ່າຍຈິດວິນຍານນັ້ນ

ເຮັດຢ່າງໃດ ແລ້ວກໍໃຫ້ຄິດວ່າທຸກສິ່ງຕ້ອງເປັນໄປໄດ້.

## ນໍາພາສຶກສາພຣະຄໍາພີ

3. ຂຽນລົງໃນກະດານ "ການສະແດງອອກຂອງໂປໂລ" ອ່ານ ເອເຟໂຊ 3:14-15. ການອະທິຖານແຕ່ລະຄັ້ງຈໍາເປັນຕ້ອງຄຸເຂົ່າທຸກຄັ້ງບໍ່? ເວົ້າເຖິງການອະທິຖານຂອງຫລາຍຄົນວາງຕົວແຕກຕ່າງກັນໄປ.

4. ຄໍາວ່າ "ບິດາ" ແລະ "ຄອບຄົວ" ໂປໂລຫລິງເຫັນພໍ່ຄົນດຽວ ຄອບຄົວດຽວ ບໍ່ວ່າຈະເປັນຄົນຕ່າງຊາດຫລືຄົນຢິວກໍຕາມ.

5. ຂຽນ "ການອ້ອນວອນອະທິຖານຂອງໂປໂລ" ແລ້ວກໍອ່ານ ຂໍ້ 16-19 ແລ້ວກໍຖາມນັກຮຽນຕາມຄໍາຖາມຕໍ່ໄປນີ້:
   - ພຣະເຈົ້າຊົງຮັ່ງມີຢ່າງໃດ?
   - ພຣະວິນຍານບໍຣິສຸດຊົງກະທໍາຢ່າງໃດໃຫ້ແກ່ພວກເຮົາແດ່?
   - ເປັນການດີບໍ່ ທີ່ເຮົາມີກໍາລັງອັນເຂັ້ມແຂງຝ່າຍຈິດໃຈ? ບໍ່ແມ່ນແຕ່ຝ່າຍຮ່າງກາຍແລະຂ້າງນອກເທົ່ານັ້ນ?
   - "ພຣະຄຣິດຊົງຕັ້ງຢູ່ໃນໃຈຂອງທ່ານທັງຫລາຍທາງຄວາມເຊື່ອ" ປໂຍກນີ້ຫມາຍຄວາມວ່າຢ່າງໃດ?
   - ເປັນຫຍັງໂປໂລຈຶ່ງໃຊ້ຄໍາວ່າວາງຮາກໃນຄວາມຮັກ?
   - ພວກໃດທີ່ເຂົ້າໃຈຄວາມຮັກຂອງພຣະຄຣິດຢ່າງເລິກເຊິ່ງແທ້? ພວກຢິວ? ຫລືພວກຕ່າງຊາດ? ຄວາມຮັກນັ້ນກວ້າງຫນາ ເລິກຕື້ນສໍ່າໃດ?

6. ອ່ານ ຂໍ້ 20-21 ເບິ່ງໃນເຈັ້ຽບົດຮຽນໄປດ້ວຍ. ຖ້າພໍເປັນໄປໄດ້ໃຫ້ນັກຮຽນຂີດກ້ອງຂໍ້ຄວາມສໍາຄັນທີ່ກ່ຽວກັບຄວາມເຂັ້ມແຂງຂອງພຣະເຈົ້າ.
   ຫລັງຈາກອ່ານຫມົດແລ້ວສເນີຖາມນັກຮຽນວ່າໃຜເກັບກໍາອັນໃດໄດ້ແດ່? ໃຫ້ແບ່ງປັນ.

## ຄໍາຫນູນໃຈສໍາລັບວັນນີ້:

7. ໃຫ້ເວົ້າເຣື່ອງນີ້ໃຫ້ນັກຮຽນຟັງ: ພາຍໃຕ້ຄວາມຫຍຸ້ງຍາກສັບສົນ, ໂປໂລຂຽນຈົດຫມາຍສະບັບນີ້ຢູ່ໃນຄຸກ, ໃກ້ຈະເຖິງປາຍທາງແຫ່ງຊີວິດຂອງລາວແລ້ວ. ໃນວັນນັ້ນຄົງຈະເປັນວັນທີ່ຮ້ອນເຮົ່າທີ່ສຸດໃນແຖບທະເລເມດີແຕຣາເນ. ບາງຄັ້ງໂປໂລເອງກໍຍັງຄິດວ່າພຣະເຈົ້າຈະຊ່ວຍຕອບສນອງຄວາມຕ້ອງການຂອງລາວຢ່າງໃດ. ໂດຍຄວາມເຊື່ອທາງດ້ານຮ່າງກາຍແລະດ້ານຈິດວິນຍານແລ້ວ, ລາວຍັງຂຽນຈົດຫມາຍສົ່ງໄປຕັກເຕືອນພີ່ນ້ອງຄຣິສຕຽນວ່າ "ໃຫ້ວາງຮາກລົງຫມັ້ນຄົງໃນຄວາມຮັກ" ເພື່ອພວກເຂົາທັງຫລາຍຈະໄດ້ເຂັ້ມແຂງ. ໂປໂລມີຄວາມເຂັ້ມແຂງຫລາຍປານໃດ ເພິ່ນກໍຕ້ອງການໃຫ້ຄຣິສຕຽນທັງຫລາຍເຂັ້ມແຂງຢ່າງນັ້ນ. ທ່ານຫວັງຈະໄດ້ຮັບຄວາມເຂັ້ມແຂງຈາກພຣະວິນຍານບໍຣິສຸດ ແລະຫຍັບເຂົ້າໃກ້ພຣະເຈົ້າບໍ່?
   ອ່ານເອເຟໂຊ 3: 14-21 ທຸກໆວັນໃນອາທິດນີ້. ພວກເຮົາຈະພົບພລັງ ແລະຄວາມຮັກຈາກພຣະເຈົ້າ ດັ່ງທີ່ໂປໂລໄດ້ຮັບນັ້ນ.

8. ເຊີນທຸກຄົນໃນຫ້ອງ ອະທິຖານງຽບໆ ຫລັງຈາກນັ້ນ ຄຣູກໍນໍາພາອະທິຖານປິດ ຕຽມຕົວເຂົ້ານະມັສການ

*ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳຄຣູສອນ
# ບົດຮຽນທີ 5
# ຈະເຣີນໃຫຍ່ຂຶ້ນຮ່ວມກັນໃນພຣະຄຣິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 4:1-16

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 4:1-16

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຄວນນຳພາຊີວິດໃຫ້ສົມກັບການຊົງເອີ້ນຂອງພຣະຄຣິດໂດຍການຈະເຣີນເຕີບໃຫຍ່ຂຶ້ນຮ່ວມກັນກັບພຣະອົງ.

**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານໄດ້ຈະເຣີນເຕີບໃຫຍ່ຂຶ້ນເປັນປະຈຳໃນຊີວິດຄຣິສຕຽນບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະບອກເຖິງຊີວິດອັນມີຄ່າທີ່ອາຈານໂປໂລໄດ້ຮ້ອງຂໍໃຫ້ຄຣິສຕຽນມີຊີວິດຢູ່ ແລະເອົາສິ່ງນັ້ນມາປະກອບໃຊ້ໃນສິ່ງອາຈານໂປໂລໄດ້ເທສນາ.

### ໜ້າທີ່ສຳຄັນຂອງຄຣິສຕຽນທຸກໆຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກໆຄົນໂດຍບໍ່ເລືອກໜ້າ
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ

## ແຜນການສອນ

### 1. ແນະນຳຈຸດປະສົງ

ຈົດໝາຍທີ່ທ່ານອາຈານໂປໂລສ່ວນຫລາຍແບ່ງເປັນສອງພາກສ່ວນໃຫຍ່ໆ. ພາກທີ່ນຶ່ງໄດ້ເວົ້າເຖິງຫລັກຄວາມເຊື່ອ ທີ່ເພິ່ນໄດ້ກ່າວສອນມາກ່ອນແລ້ວ. ພາກທີສອງໄດ້ຢ້ຳເຖິງທັມມະຈະຣິຍາ ແລະສິ່ງທີ່ຄວນເອົາມາປະຕິບັດປະກອບໃຊ້ຕໍ່ຫລັກຄວາມເຊື່ອນັ້ນ. ຕາມປົກກະຕິ ອາຈານໂປໂລ ໄດ້ເອົາຄຳເຫລົ່ານີ້ <u>ເປັນດັ່ງນັ້ນ</u> ຫລືສົມກັບ <u>ເພາະສະນັ້ນ</u> ມາໃຊ້ໃນການຂຽນຂອງເພິ່ນເພື່ອການຢ້ຳເຖິງຄວາມສຳຄັນທີ່ເວົ້າມາກ່ອນ ໃຫ້ຜູ້ຟັງເອົາໃຈໃສ່ເປັນພິເສດ.

### ນຳເຣື່ອງເຂົ້າສູ່ຊີວິດ

໒. ໃຫ້ຂຽນຄຳຖາມໃສ່ກະດານ, "ທ່ານໄດ້ຈະເຣີນໃຫຍ່ຂຶ້ນຢູ່ບໍ່ໃນຖານະເປັນຄຣິສຕຽນ?" ນຳພາສະມາຊິກສຶກສາຕາມຄຳຖາມນັ້ນ ແລະພະຍາຍາມຊອກຫາຄຳຕອບ. ຖ້າບໍ່ໃຫຍ່ກໍຊອກຫາວ່າອັນໃດເປັນປັຣະປັກ ຫລືບັນຫາ?

3. ເຊີນໃຫ້ຄົນອື່ນອອກຄວາມເຫັນກັບຄວາມເວົ້າຕໍ່ໄປນີ້: ຂ້າພະເຈົ້າມີແຜນການຈະໃຫ້ຕົນເອງຈະເຣີ່ມເຕີບໃຫຍ່ຂື້ນໃນເດືອນ 8 ຂອງປີໜ້າ. ນັ້ນແມ່ນຄວາມນຶກຄຶດຂອງພວກເຮົາສ່ວນຫລາຍແມ່ນບໍ່? ທ່ານເຄີຍຮັບຜົນສໍາເຣັດໃນການກາຍເປັນຜູ້ອາວຸໂສໃນຄວາມເຊື່ອບໍ່?

4. ຮຽກຮ້ອງໃຫ້ເອົາໃຈໃສ່ເຖິງຈຸດປະສົງສໍາຄັນຂອງບົດຮຽນ. ກ່ອນທີ່ພວກເຮົາຈະໄດ້ສໍາຣວດເບິ່ງບົດຮຽນທີ 4 ໃຫ້ພວກເຮົາເບິ່ງຄືນເຖິງການອ້ອນວອນຂອງອາຈານໂປໂລທີ່ມີອໍານາດໃນ ເອເຟໂຊ 3:16-19. ໃຫ້ອ່ານນໍາກັນໃນຫ້ອງ ແລະຂໍໃຫ້ຜູ້ນຶ່ງບອກເຖິງພຣະພອນບາງຢ່າງທີ່ເພິ່ນໄດ້ອ້ອນວອນເພື່ອ.

5. ອ່ານ ເອເຟໂຊ 4:1-2. ໃຫ້ບອກວ່າຕອນນີ້ອາຈານໂປໂລໄດ້ໃຊ້ຄໍາເວົ້າປ່ຽນປໂຍກເຊັ່ນ: "ດັ່ງນັ້ນ"

6. ອ່ານ ເອເຟໂຊ 4:3-6. ກ່າວວ່າ, ອາຈານໂປໂລໄດ້ເນັ້ນເຖິງການເປັນອັນນຶ່ງອັນດຽວກັນໃນຄຣິສຕຈັກໃໝ່ໃນເມືອງ ເອເຟໂຊ. ເພິ່ນໃຊ້ຄໍາເວົ້າ "ນຶ່ງ" ເຈັດເທື່ອໃນຂໍ້ ທີ 4-6. ຖາມສະມາຊິກວ່າ: ເປັນຫຍັງອາຈານໂປໂລຈຶ່ງເນັ້ນໜັກເຖິງສິ່ງນີ້? ເປັນການຈໍາເປັນບໍ່ທີ່ພວກເຮົາທຸກວັນນີ້ຄວນເອົາໃຈໃສ່ໃນເຣື່ອງນີ້ຄືກັນ? ຂໍ້ນີ້ມີຄວາມໝາຍສໍາລັບພວກເຮົາທີ່ເປັນຄຣິສຕຽນຄະນະບັບຕິສບໍ່ ?

7. ກ່າວວ່າ: ສິ່ງນຶ່ງເປັນຫລັກຄວາມເຊື່ອຂອງຄະນະບັບຕິສຄື ໄດ້ຮັບຄວາມພົ້ນທາງພຣະຄຸນໃນຄວາມເຊື່ອເທົ່ານັ້ນ. (ເບິ່ງ ເອເຟໂຊ 2:8-9)

8. ກ່າວເຖິງຄວາມສໍາຄັນຂອງການເປັນນ້ຳນຶ່ງໃຈດຽວກັນໃນຄຣິສຕະຈັກ. ຂໍໃຫ້ຄົນນຶ່ງອ່ານ ເອເຟໂຊ 4:13-16. ຂໍ້ນີ້ໄດ້ເວົ້າຫຍັງກັບທ່ານແດ່? ຂໍ້ນີ້ໄດ້ເວົ້າເຖິງການເປັນອັນນຶ່ງອັນດຽວກັນບໍ່?

9. ຫລັງຈາກຈົບບົດຮຽນແລ້ວ. ຂໍໃຫ້ຄົນນຶ່ງຄົນໃດໃນຫ້ອງສລູບເຖິງຄວາມໝາຍ. ສຸດທ້າຍ ຖາມວ່າມີວິທີສະເພາະອັນໃດບໍ່ທີ່ທ່ານຈະເອົາມາປະກອບໃຊ້ກັບສິ່ງທີ່ອາຈານໂປໂລເທສນາ?

10. ອ້ອນວອນປິດເພື່ອໃຫ້ອີງພຣະວິນຍານນໍາພາເພື່ອສົ່ງເສີມພຣະກາຍຂອງພຣະຄຣິດ, ພາຍໃນຄຣິສຕະຈັກ ແລະພາຍໃນກຸ່ມສັງຄົມພາຍນອກທີ່ຢູ່ໃກ້ຄຽງຄຣິສຕະຈັກຂອງເຮົາ.

*ດຣ. ບຸນ ວົງສຸຣິດທ໌*

# ບົດແນະນຳຄຣູສອນ
# ບົດຮຽນທີ 6
# ເຮັດຕາມແນວທາງແນະນຳ

---

| | |
|---|---|
| **ຂໍ້ພຣະຄັມພີສຳລັບບົດຮຽນນີ້:** | ເອເຟໂຊ 4:17-5:2, 11-16 |
| **ພູມຫລັງຂອງພຣະຄັມພີ:** | ເອເຟໂຊ 4:17-5:20 |
| **ຈຸດສຳຄັນຂອງບົດຮຽນນີ້:** | ພົ້ນດ້ວຍພຣະຄຸນຂອງພຣະເຈົ້າທາງຄວາມເຊື່ອເທົ່ານັ້ນ, ຄຣິສຕຽນຮຽນຮູ້ເຖິງພຣະຄຣິດ ແລະມີຊີວິດຢູ່ໃຫ້ຖືກຕ້ອງ. |
| **ຄຳຖາມເພື່ອການຄົ້ນຄວ້າ:** | ເຮັດວິທີໃດທີ່ຈະເອົາຄຳສອນຢ່າງຄຣິສຕຽນມາໃຊ້ຕໍ່ການປະພຶດໃນສັງຄົມທີ່ໂຍະຍານໂດຍທີ່ບໍ່ເປັນຄົນສອງໜ້າໄດ້? |
| **ຈຸດປະສົງຂອງບົດຮຽນນີ້:** | ເພື່ອຍົກເອົາຄຳສອນໃນພຣະຄຳຕອນທີ່ທ້າທາຍຕໍ່ຊີວິດຂອງຂ້າພະເຈົ້າ ແລະເອົາມາປະກອບໃຊ້ໃນຊີວິດ. |

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກໆຄົນໃຫ້ເຂົ້າໃຈ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ

## ແຜນການສອນ

### 1. ແນະນຳຈຸດປະສົງ

ອາຈານໂປໂລໄດ້ກ່າວເຣື່ອງການເປັນອັນນຶ່ງອັນດຽວກັນ ແລະວິທີທາງທີ່ພຣະເຈົ້າໄດ້ປະທານພອນສວັນເພື່ອເປັນເຄື່ອງຊ່ອຍໃຫ້ຄຣິສຕະຈັກກາຍເປັນອັນນຶ່ງອັນດຽວກັນໄດ້. ບາດນີ້ເພິ່ນໄດ້ກ່າວບອກໂດຍສະເພາະເຖິງສິ່ງເພິ່ນຕ້ອງການໃຫ້ຄຣິສະຕຽນໃນສມັຍກ່ອນໃຫ້ຍ່າງເດີນໄປດ້ວຍຄວາມເຊື່ອ. ບົດທີ 2 ເພິ່ນໄດ້ເວົ້າເຖິງຫລັກຄວາມເຊື່ອທີ່ມີຄວາມແຕກຕ່າງກັນລະຫວ່າງພວກຢິວກັບພວກກຣີກ. ທີແລກອາຈານໂປໂລໄດ້ເວົ້າໃນບົດທີ 4 ເຖິງການກະທຳບາງຢ່າງທີ່ເປັນເຫດຜົນເຮັດໃຫ້ພວກເຂົາໄດ້ແຍກຈາກກັນ.

### ນຳເຣື່ອງເຂົ້າສູ່ຊີວິດ

1. ຂຽນໃສ່ກະດານ "ການແນະນຳທາງໃຫ້ມີຊີວິດຢູ່ດີ." ຮ້ອງຂໍໃຫ້ຫ້ອງຮຽນພິຈາຣະນາເຖິງການແນະນຳທາງໃຫ້ຄົນອື່ນມີຊີວິດຢູ່ດີມີສຸກ ທີ່ຜູ້ເປັນພໍ່ແມ່ຜູ້ມີລູກນ້ອຍ ຫລືລູກເປັນບ່າວສາວຢູ່ນຳ. ໜູນໃຈໃຫ້ສະມາຊິກຫວນຄິດເຖິງພໍ່ແມ່ໄດ້ສັ່ງສອນເວລາຕົນເອງຍັງນ້ອຍ. ຮ້ອງຂໍໃຫ້ຜູ້ໃດຜູ້ນຶ່ງຂຽນໃສ່ກະດານ (ຕົວຢ່າງ: "ໃຫ້ເບິ່ງຊ້າຍເບິ່ງຂວາກ່ອນຂ້າມທາງ." "ລ້າງມືກ່ອນກິນເຂົ້າ"; "ລະວັງເວລາຂັບຣົດ")

2. ກ່າວວ່າ: ໃນວັນນີ້ທ່ານອາຈານໂປໂລໄດ້ຂຽນເປັນລຳດັບອັນຍືດຍາວເຖິງການແນະນຳທາງໃຫ້ມີຊີວິດຢູ່ດີຢ່າງຄຣິສຕຽນ. ບາງປຶ້ມພຣະຄັມພີແປໃນບ່ອນນີ້ວ່າ "ການຍ່າງຂອງຄຣິສຕຽນ" ທີ່ໄດ້ພົບເຫັນໃນ ເອເຟໂຊ 4:17. ຄຳເວົ້າ ຍ່າງເດີນໄດ້ກ່າວເຖິງສາມເທື່ອ (ອຟຊ. 4:17; 5:8, 15). ຈຸດປະສົງໃນວັນນີ້ຄືຊອກຫາຄຳແນະນຳທີ່ທ້າທາຍ ແລະຕັດສິນໃຈປະຕິບັດ.

3. ຂໍໃຫ້ສະມາຊິກອ່ານ ເອເຟໂຊ 4:17-19. ໃຫ້ສັງເກດຄວາມແຕກຕ່າງລະຫວ່າງພວກຕ່າງຊາດຜູ້ຍັງບໍ່ທັນເຊື່ອ ແລະພວກໄດ້ຮັບຊີວິດໃໝ່ໃນພຣະຄຣິດ. ໃຫ້ຕອບຄຳຖາມດັ່ງຕໍ່ລົງໄປນີ້:

- ທ່ານຄຶດວ່າຄວາມໝາຍຂອງຄຳເວົ້າວ່າ "ດ້ວຍໃຈໂງ່ອັນຫາປໂຍດບໍ່ໄດ້" ມີຄວາມໝາຍແນວໃດ?
- ຄຳອະທິບາຍສາມຢ່າງທີ່ອາຈານໂປໂລບອກໃຫ້ພວກຕ່າງຊາດ ຜູ້ຂາດຄວາມເຂົ້າໃຈ ແລະມີການປະພຶດບໍ່ດີມີຫຍັງແດ່? (4:18-19)
- ໃນວິທີທາງໃດທີ່ພວກເຮົາຍັງໄດ້ພົບເຫັນການປະພຶດຢ່າງນີ້ເກີດຂຶ້ນໃນທຸກວັນນີ້?

4. ອ່ານ ເອເຟໂຊ 4:20-24. ໃຫ້ກ່າວເຖິງຄຳເວົ້າວ່າ ໃຫ້ເອົາຂອງເກົ່າຂອງເປື້ອນອອກໄປຈາກຊີວິດ ແລະໃຫ້ເອົາສິ່ງໃໝ່ ສິ່ງສະອາດ ແລະສິ່ງເປັນປໂຍດເຂົ້າມາໃນຊີວິດ.

5. ຂໍໃຫ້ເລົ່າເຣື່ອງຈິງໃນຫ້ອງຮຽນເຖິງຄວາມໝາຍຂອງຄວາມລອດພົ້ນ, ຮ້ອງຂໍໃຫ້ສະມາຊິກໃນຫ້ອງຮຽນແບ່ງປັນປະສົບການກັບອົງພຣະຄຣິດເຈົ້າຢ່າງໃດ? ຫລັງຈາກມາຮູ້ ຮັບເອົາພຣະຄຣິດເຂົ້າມາໃນຊີວິດແລ້ວມີຫຍັງເກີດຂຶ້ນໃນຊີວິດບໍ່?

6. ເຊີນຜູ້ໃດຜູ້ນຶ່ງອ່ານ ເອເຟໂຊ 4:25-5:3. ໃຫ້ອ່ານດັງໆເພື່ອຄົນອື່ນຈະໄດ້ຍິນແລະຕິດຕາມໄປໃນປຶ້ມພຣະຄັມພີຂອງເຂົາ. ເຊີນໃຫ້ສອງສາມຄົນບອກເຖິງບາງຢ່າງທີ່ເຫັນວ່າປະຕິບັດຍາກຫລາຍ.

7. ເຊີນໃຫ້ບາງຄົນອ່ານ ເອເຟໂຊ 5:7-11, 15-16. ໃຫ້ບອກຄວາມແຕກຕ່າງ ລະວ່າງແສງສະວ່າງ ແລະຄວາມມືດ. ຕັ້ງຄຳຖາມວ່າ ຍ່າງເດີນໄປໃນແສງສະວ່າງມີຄວາມໝາຍຢ່າງໃດ? ໃນຂໍ້ 16 ໄດ້ໄປຄຣງຄູ່ກັນໃນບົດ 5 ຢ່າງໃດ?

*ດຣ. ບຸນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 7
# ເປັນຄຣິສຕຽນທີ່ມີຄວາມສຳພັນດີໃນຄອບຄົວ

---

| | |
|---|---|
| **ຂໍ້ພຣະຄັມພີສຳລັບບົດຮຽນນີ້:** | ເອເຟໂຊ 5:21-6:9 |
| **ພູມຫລັງຂອງພຣະຄັມພີ:** | ເອເຟໂຊ 5:21-6:9 |
| **ຈຸດສຳຄັນຂອງບົດຮຽນນີ້:** | ຄວາມສຳພັນໃນບ້ານເປັນຄຳສັ່ງເດັດຂາດເພາະຄວາມຢຳເກງອົງພຣະຄຣິດ. |
| **ຄຳຖາມເພື່ອການຄົ້ນຄວ້າ:** | ຄວາມເຊື່ອຂອງຄຣິສຕຽນໄດ້ເປັນຜົນຕໍ່ຄວາມສຳພັນໃນບ້ານ ຫລືບໍ່? |
| **ຈຸດປະສົງຂອງບົດຮຽນນີ້:** | ເພື່ອຈະບອກເຖິງຄວາມແຕກຕ່າງທີ່ເປັນຜົນດີໄດ້ເກີດຂຶ້ນໃນຄອບຄົວ ຖ້າຂ້າພະເຈົ້າໄດ້ປະຕິບັດຕາມຄຳສັ່ງຂອງພຣະຄຣິດ ເພາະຄວາມຢຳເກງຕໍ່ພຣະອົງ. |

**ໜ້າທີ່ສຳຄັນຂອງຄຣິສຕຽນ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ແຜນການສອນ

### 1. ແນະນຳຈຸດປະສົງ

ຖ້າຄຣິສຕຽນຍອມຟັງຊຶ່ງກັນແລະກັນດ້ວຍຄວາມພໍໃຈເພາະພວກເຮົາໄດ້ເຊື່ອຟັງອົງພຣະເຢຊູ ແລະໃນທີ່ສຸດຊີວິດແລະໃນຄອບຄົວຈະໄດ້ຮັບຜົນດີຄືຄວາມຮັກ ແລະເປັນລະບົບລະບຽບດີຂຶ້ນ. ໃນທີ່ສຸດຄຣິສຕະຈັກກໍອາດສາມາດເປັນຕົວຢ່າງຕໍ່ໂລກຢ່າງມີພະລັງຊຶ່ງຕົງກັນຂ້າມ ຖ້າຄອບຄົວແຕກແຍກຜິດຖຽງກັນເປັນປະຈຳ ເໝືອນດັ່ງພວກເຮົາໄດ້ເຫັນແລະໄດ້ຍິນມາເປັນປະຈຳໃນທຸກວັນນີ້.

**ນຳເຣື່ອງເຂົ້າສູ່ຊີວິດ**

1. ກ່ອນເຂົ້າຫ້ອງຮຽນໃຫ້ຂຽນຄຳຖາມທີ່ເປີດໂອກາດໃຫ້ສະມາຊິກໃນຫ້ອງສົນໃຈ ເພື່ອແບ່ງປັນກັບຄົນອື່ນໆໃນຫ້ອງຮຽນ. ບອກໃຫ້ທຸກຄົນເບິ່ງແລະຄິດເຖິງຄຳຖາມ "ຄິດເບິ່ງສະພາບໃນຄອບຄົວຂ້າພະເຈົ້າ," ຮ້ອງຂໍໃຫ້ສະມາຊິກພິຈະຣະນາເບິ່ງຊີວິດໃນຄອບຄົວຂອງຕົນເອງ.

2. ຫລັງຈາກອະທິບາຍໃຫ້ທຸກຄົນເຂົ້າໃຈເຖິງຈຸດປະສົງທີ່ຕ້ອງເຮັດນັ້ນແລ້ວ ຂໍຮ້ອງໃຫ້ຈັບຄູ່ກັນ (ບໍ່ໃຫ້ຜົວເມັຽເປັນຄູ່ກັນ) ແລະໃຫ້ພວກເຂົາໃຊ້ເວລາສາມສີ່ນາທີສົນທະນາກັນໃນເຣື່ອງຄອບຄົວຂອງເຂົາ.

3. ແນະນຳເຖິງຄຳຖາມ "ຄິດເບິ່ງສະພາບໃນຄອບຄົວຂ້າພະເຈົ້າ" ໃຫ້ສະມາຊິກບອກເຖິງກຳເນີດຂອງຄອບຄົວເຂົາ ນັ້ນມັນເປັນໄປຢ່າງໃດ, ແລ້ວໃຫ້ເຂົາເຈົ້າຕອບຄຳຖາມດັ່ງຕໍ່ລົງໄປນີ້:

(1). ໃຜເປັນຄົນຕັນສິນໃຈ? (ພໍ່, ແມ່, ທັງສອງຄົນ, ຫລືຄົນອື່ນ)
(2). ໃຜເປັນຜູ້ນຳໃນດ້ານຈິດວິນຍານ? (ພໍ່, ແມ່, ທັງສອງຄົນ, ຫລືຄົນອື່ນ)
(3). ໃຜເປັນຄົນສັ່ງສອນໃນຄອບຄົວ? (ພໍ່, ແມ່, ທັງສອງຄົນ, ຫລືຄົນອື່ນ)
(4). ໃຜເປັນຄົນສະແດງຄວາມຮັກ ແລະໃຫ້ກຳລັງໃຈ? (ພໍ່, ແມ່, ທັງສອງຄົນ, ຫລືຄົນອື່ນ)
(5). ໃນເມື່ອທ່ານໄດ້ທວນຄິດຄືນຫລັງໃນຄອບຄົວ ເຫັນວ່າມີລະບຽບດີ ແລະໃຫ້ກຽດແກ່ພຣະຄຣິດບໍ່?

4. ຮ້ອງຂໍໃຫ້ຜູ້ໃດຜູ້ນຶ່ງອ່ານ ເອເຟໂຊ 5:21 ຈາກພຣະຄັມພີຫລາຍໆຫົວ.
5. ຮ້ອງຂໍໃຫ້ຜູ້ຍິງອ່ານ ເອເຟໂຊ 5:22-24. ຖ້າຍອມຟັງຄວາມກັນດ້ວຍຄວາມຮັກແລ້ວ ແລະຈະອະທິບາຍຂໍ້ 22 ຢ່າງໃດ? ອາຈານໂປໂລໄດ້ເວົ້າເຖິງຜູ້ຍິງໃນສມັຍທີ່ນຶ່ງເທົ່ານັ້ນບໍ່? ຜູ້ຍິງແລະການແຕ່ງງານໃນທຸກວັນນີ້ເດ ຈະເອົາປະກອບໃຊ້ ໄດ້ບໍ່?
6. ກ່າວວ່າ: ອາຈານໂປໂລໄດ້ໃຊ້ພຣະຄຳຕອນນີ້ວ່າ, "ຍອມຟັງ" ໃນສະພາບຄຣິສຕຽນທີ່ມີຄວາມສຳພັນກັນດີໃນ ຄອບຄົວຕໍ່ຄົນອື່ນໆ, ຕໍ່ຣັຖບານ, ເຈົ້ານາຍຂອງຂ້າທາດ, ຜູ້ນຳໃນຄຣິສຕະຈັກ, ແລະຄູ່ແຕ່ງງານກັນ. ໃຫ້ທຸກຄົນ ແບ່ງປັນ ຄວາມໝາຍຂອງຄຳວ່າ ຍອມຟັງ.
7. ຮ້ອງຂໍໃຫ້ຜູ້ຊາຍອ່ານ ເອເຟໂຊ 5:25-30, 33. ບອກໃຫ້ສະມາຊິກເບິ່ງຄຳສອນທີ່ບອກໃຫ້ສາມີຮັກພັຣຍາ ເໝືອນ ພຣະຄຣິດຮັກຄຣິສຕະຈັກ. ຕັ້ງຄຳຖາມວ່າ, <u>ຂໍ້ນີ້ໄດ້ສອນຜູ້ເປັນສາມີຢ່າງໃດ?</u> ຖາມອີກວ່າ ມີອັນໃດເກີດຂຶ້ນ ຈາກການສຶກສາພຣະຄັມພີຂໍ້ນີ້ຂຶ້ນມາບໍ່?
8. ຮ້ອງຂໍໃຫ້ຄົນນຶ່ງອ່ານ ເອເຟໂຊ 6:1-4. ອັນໃດເປັນສິ່ງທີ່ຜູ້ເປັນລູກຄວນປະຕິບັດຕໍ່ຜູ້ເປັນພໍ່ແມ່? ຖາມອີກວ່າເປັນ ຫຍັງອາຈານໂປໂລຈຶ່ງຍົກເອົາຂໍ້ 4 ມາເວົ້າຊ້ຳແລ້ວຊ້ຳອີກ?
9. ຖາມວ່າ. ຄອບຄົວໃນທຸກວັນນີ້ເປັນປໂຍດບໍ່ ຖ້າທຸກຄົນຢຳເກງພຣະຄຣິດ? ຮ້ອງຂໍໃຫ້ຜູ້ໃດຜູ້ນຶ່ງອອກຄວາມເຫັນ. ຫລັງຈາກມີຄົນອອກຄວາມເຫັນແລ້ວ, ຖາມອີກວ່າ, ຄອບຄົວຂອງທ່ານເດຈະເຮັດແນວໃດກັບບົດຮຽນວັນນີ້?

*ດຣ. ບຸນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 8
# ເບິ່ງຊີວິດຈາກທັສນະຂອງນິຣັນການ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີລິບປອຍ 1:12-14, 19-26

**ພູມຫລັງຂອງພຣະຄັມພີ:** ຟີລິບປອຍ 1: 1-26

**ຈຸດສຳຄັນຂອງບົດຮຽນນີ້:** ດຳເນີນຊີວິດຈາກທັສນະຂອງນິຣັນການ ໝາຍເຖິງການຖວາຍກຽດ ແລະການປະກາດພຣະຄຣິດ, ໄວ້ວາງໃຈໃນພຣະອົງບໍ່ວ່າພວກເຮົາຈະພະເຊີນກັບສະພາບການຢ່າງໃດ.

**ຄຳຖາມເພື່ອການຄົ້ນຄວ້າ:** ແມ່ນຫຍັງແດ່ທີ່ໃຫ້ຄວາມໝາຍ ແລະທັສນະກັບຊີວິດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍວ່າ ການເອົາພຣະຄຣິດເປັນຈຸດສຳຄັນໃນຊີວິດຂອງໂປໂລໄດ້ຊ່ວຍຫຍັງລາວແດ່ ແລະເພື່ອຮຽນຮູ້ວ່າສິ່ງເຫລົ່ານັ້ນຈະຊ່ວຍພວກເຮົາຢ່າງໃດ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມ: ຂ້ອຍຂໍອະນຸຍາດຖາມກ່ຽວກັບຄວາມຕ້ອງການຂອງທ່ານໃນປັດຈຸບັນ ແລະໃນອະນາຄົດໄດ້ບໍ່? ແມ່ນຫຍັງທີ່ເຮັດໃຫ້ທ່ານມີຄວາມສຸກທີ່ສຸດໃນໂລກ? ໃຫ້ເວລາຄິດ. ເວົ້າວ່າ, ເພາະຊີວິດຂອງພວກເຮົາໃນໂລກນັ້ນມັນສັ້ນຫລາຍ, ຂ້ອຍມີຄຳຖາມທີສອງສຳລັບທ່ານ: ແມ່ນຫຍັງທີ່ທ່ານລໍຄອຍ ຫລາຍກວ່າທຸກຢ່າງ ໃນຟ້າສວັນ? ໃຫ້ເວລາຄິດ. ເວົ້າວ່າ, ໃນຂະນະທີ່ໂປໂລຂຽນຈົດໝາຍເຖິງຄຣິສຕະຈັກຟີລິບປອຍ ຈາກຄຸກທີ່ກຸງໂຣມ, ທ່ານກໍໄດ້ພິຈາຣະນາຄຳຖາມທີ່ຂ້ອຍໄດ້ຖາມທ່ານນັ້ນຢູ່.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ກ່ອນມື້ສອນບົດຮຽນ, ຊອກເອົາຮູບທ້ອງຟ້າຍາມກາງຄືນ, ທ່ານອາດຈະດາວໂລດຈາກອິນເຕີແນັດກໍໄດ້. ຖ້າບໍ່ມີຮູບທ່ານອາດຈະຖາມຄຳຖາມຕໍ່ໄປນີ້: ເວລາທ່ານອອກໄປນອກເມືອງຍາມກາງຄືນ, ທ່ານເຄີຍຫລຽວເບິ່ງທ້ອງຟ້າ ແລະ ພິຈາຣະນາເບິ່ງດວງດາວຢ່າງຫລວງຫລາຍຊຶ່ງພວກເຮົາບໍ່ສາມາດນັບໄດ້ນັ້ນບໍ່? ທ່ານເຄີຍຄິດວ່າທ່ານມີຄວາມສຳຄັນຫລາຍປານໃດສຳລັບໂລກອັນກວ້າງໃຫຍ່ນີ້?

   ຖ້າທ່ານມີຮູບ, ຊີ້ໃຫ້ນັກຮຽນເບິ່ງຮູບໃບນັ້ນ. ແລ້ວຖາມ: ເບິ່ງດວງດາວທີ່ຢູ່ຫ່າງໄກຫລາຍໂກດໄມ, ທ່ານຄິດວ່າສິ່ງທີ່ພວກເຮົາກຳລັງເຮັດຢູ່ໃນໂລກຈະມີຄວາມໝາຍຫຍັງແດ່ສຳລັບພຣະເຈົ້າອົງຍິ່ງໃຫຍ່ຜູ້ເປັນເຈົ້າຂອງຟ້າສວັນ ແລະແຜ່ນດິນໂລກຫລາຍປານໃດ?

ຂຽນຫົວຂໍ້ໃຫຍ່ຂອງບົດຮຽນໃສ່ກະດານ ຫລືຕັ້ງໂປສເຕີທີ່ໄດ້ຕຽມໄວ້ກ່ອນແລ້ວ:

**ເບິ່ງຊີວິດຈາກທັສນະຂອງນິຣັນການ**

ຟີລິບປອຍ 1:12-26

(1) ການຂຍາຍຕົວຢ່າງອັສຈັນຂອງຂ່າວປະເສີດໃນຂະນະທີ່ໂປໂລຖືກຄຸມຂັງ (1:12-14)

(2) ພຣະນາມຂອງພຣະຄຣິດຖືກຍົກຍ້ອງຈາກສິ່ງທີ່ເກີດຂຶ້ນກັບໂປໂລ (1:19-21)

(3) ຄວາມພຍາຍາມຂອງໂປໂລທີ່ຈະໃຫ້ພຣະຄຣິດເປັນຈຸດສຳຄັນໃນຊີວິດ (1:21-26)

ອ່ານຫົວຂໍ້ໃຫຍ່, ແນະນຳວ່າສິ່ງເຫລົ່ານີ້ ຄືສິ່ງທີ່ໂປໂລກຳລັງຫ່ວງໃຍໃນເວລາທີ່ທ່ານຂຽນຈົດໝາຍໄປເຖິງຄຣິສຕະຈັກຟີລິປອຍ. ຖາມນັກຮຽນວ່າພວກເຂົາເຈົ້າພໍຈະສັງເກດໄດ້ບໍ່ວ່າໂປໂລມີຄວາມປະສົງທີ່ຈະໃຫ້ພຣະຄຣິດເປັນຈຸດສຳຄັນໃນຊີວິດຂອງລາວ.

3. ຄິດເຖິງສິ່ງທີ່ພວກເຮົາຫ່ວງໃຍທີ່ສຸດໃນຊີວິດ. ຂຽນສິ່ງເຫລົ່ານັ້ນໃສ່ກະດານ. (ເງິນ, ສຸຂພາບ, ວຽກງານ, ຄວາມສຳເຣັດຂອງສະມາຊິກຄອບຄົວ, ຄວາມລອດພົ້ນຂອງຜູ້ໃດຜູ້ນຶ່ງ, ການດູແລຄົນທີ່ພວກເຮົາຮັກ, ສະຖານະການຕ່າງໆໃນໂລກ, ແລະຕໍ່ໆໄປ)

   ໃຫ້ນັກຮຽນຊ່ວຍຈັດລະດັບຄວາມສຳຄັນຂອງສິ່ງຕ່າງໆທີ່ຂຽນໄວ້ແລ້ວ (1 ເຖິງ 5, 1 ຖືວ່າສຳຄັນທີ່ສຸດ). ຫລັງຈາກນັ້ນໃຫ້ຖາມວ່າ: <u>ພວກເຮົາຈະໃຫ້ພຣະເຢຊູຄຣິດ ແລະການປະກາດຂ່າວປະເສີດເປັນນຶ່ງໃນຊີວິດໄດ້ວິທີໃດ?</u>

4. ແນະນຳຈົດໝາຍເຖິງຄຣິສຕະຈັກຟີລິບປອຍ ແບບສັ້ນໆ. ໃຊ້ບົດຮຽນຊ່ວຍ. ອະທິຍາຍບົດຮຽນແຕ່ລະຫົວຂໍ້ໄປ. ເວລາອ່ານເຖິງຂໍ້ 21 ໃຫ້ເນັ້ນຄຳເວົ້າຂອງໂປໂລທີ່ວ່າ "ຖ້າເຮົາມີຊີວິດພຣະຄຣິດເປັນຊີວິດນັ້ນ." ຄຳວ່າ "ເຮົາ" ໃນທີ່ນີ້ສຳຄັນ ເພາະໝາຍເຖິງ "ສຳລັບຕົວຂ້ອຍ... ພຣະຄຣິດເປັນຊີວິດ. ໂປໂລເວົ້າເຖິງຊີວິດທັງໝົດຂອງລາວແມ່ນພຣະຄຣິດ. ຖາມ, ທ່ານມີທັສນະຢ່າງໃດກ່ຽວກັບຊີວິດ? ແມ່ນຫຍັງຄືເປົ້າໝາຍໃນຊີວິດປະຈຳວັນ?

5. ເບິ່ງບົດຄວາມເຣື່ອງ "ທັສນະກ່ຽວກັບຄວາມຕາຍຂອງ ກຣີກ-ໂຣມັນ" ໃນຕອນສຸດທ້າຍຂອງບົດຮຽນ.

6. ອະທິບາຍຄວາມໝາຍຂອງຂໍ້ 21 ເນັ້ນຄຳເວົ້າຂອງໂປໂລທີ່ວ່າ "ຖ້າເຮົາຕາຍກໍເປັນປໂຍດແກ່ເຮົາ."

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ພານັກຮຽນເບິ່ງຄຳຖາມໃນຕອນທ້າຍຂອງບົດຮຽນ. ໃຫ້ໂອກາດແຕ່ລະຄົນໃຫ້ມີສ່ວນຕອບຄຳຖາມ. ຖາມ: ການຍອມໃຫ້ພຣະຄຣິດເປັນນຶ່ງໃນຊີວິດໄດ້ປ່ຽນແປງໂປໂລ, ທ່ານຄິດວ່າມີຫຍັງແດ່ທີ່ຈະດີກວ່າໃນການດຳເນີນຊີວິດພວກເຮົາ?

8. ຊັກຊວນໃຫ້ແຕ່ລະຄົນສຳຣວດເບິ່ງຊີວິດຂອງຕົວເອງ. ຖ້າມີຄົນຖາມວ່າ ແມ່ນຫຍັງທີ່ທ່ານເຫັນວ່າສຳຄັນທີ່ສຸດໃນຊີວິດ, ທ່ານຈະຕອບວ່າແມ່ນຫຍັງ ຫລືຜູ້ໃດ? ຄົນທີ່ຖາມຈະເຫັນພຣະຄຣິດໃນຊີວິດທ່ານບໍ່? ຖ້າພວກເຮົາເບິ່ງຊີວິດຈາກທັສນະຂອງນິຣັນການ, ທ່ານຄິດວ່າຊີວິດຂອງພວກເຮົາຈະປ່ຽນແປງຢ່າງໃດ?

9. ອ້ອນວອນຂໍພຣະເຈົ້າໃຫ້ເປີດຕາພວກເຮົາ ແລະໃຫ້ພວກເຮົາໄດ້ດຳເນີນຊີວິດເພື່ອພຣະອົງຢ່າງເຕັມສ່ວນ. ອ້ອນວອນໃຫ້ພວກເຮົາດຳເນີນຊີວິດຈາກທັສນະຂອງນິຣັນການ ເພື່ອພວກເຮົາຈະບໍ່ໄດ້ເຮັດຕາມຣາຄະຕັນຫາຂອງໂລກນີ້. ອ້ອນວອນຂໍໃຫ້ພຣະເຈົ້າຊ່ວຍພວກເຮົາ ເພື່ອຈະໄດ້ຊ່ວຍຄົນອື່ນ ເຖິງວ່າພວກເຮົາເອງກໍກຳລັງຕໍ່ສູ້ກັບບັນຫາໃນຊີວິດ. ຂອບພຣະຄຸນພຣະເຈົ້າທີ່ຟ້າສວັນກຳລັງລໍຄອຍພວກເຮົາ ເມື່ອພວກເຮົາສຳເຣັດວຽກງານໃນໂລກນີ້.

*ດຣ. ສິດນີ ຄານ*

## ບົດແນະນຳຄຣູສອນ

## ບົດຮຽນທີ 9

## ຕິດຕາມແບບຢ່າງຊີວິດຂອງພຣະຄຣິດ"

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີລິບປອຍ 2:1-11

**ພູມຫລັງຂອງພຣະຄັມພີ:** ຟີລິບປອຍ 1:27--2:18

**ຈຸດສຳຄັນຂອງບົດຮຽນນີ້:** ເວລາພວກເຮົາດຳເນີນຊີວິດຕາມການນຳພາຂອງພຣະຄຣິດ, ພວກເຮົາຈະຕິດຕາມແບບຢ່າງການຖ່ອມຕົວຂອງພຣະອົງ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງການຖ່ອມຕົວຈຶ່ງເປັນເຣື່ອງຍາກ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອປຽບທຽບຄວາມຖ່ອມຕົວທີ່ເຫັນໃນພຣະຄຣິດກັບການປະພຶດຕົວຂອງຄົນທົ່ວໄປ ແລະຕັດສິນໃຈວ່າຂ້ອຍຈະເອົາແບບຢ່າງຂອງພຣະຄຣິດມາປະຕິບັດ.

### ແຜນສຳລັບການສອນ

### ນຳບົດຮຽນເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຂໍ້ຄວາມເຫລົ່ານີ້ໃສ່ກະດານ ແລ້ວເລີ້ມຖາມ: ຄົນທີ່ເຂັ້ມແຂງມີລັກສນະແນວໃດ? ໃຫ້ເວລາຕອບ. ຈຳໄວ້ວ່າ ພຣະເຢຊູເປັນຄົນເຂັ້ມແຂງ ແຕ່ພຣະອົງມີຄວາມຖ່ອມຕົວຫລາຍ. ພຣະອົງ "ເປັນຜູ້ໃຈອ່ອນສຸພາບ ແລະຖ່ອມລົງ" (ມັດທາຍ 11:29). ຖາມ: ຄວາມອ່ອນສຸພາບຂອງພຣະເຢຊູ ຈະຖືວ່າເປັນຄວາມອ່ອນແອໄດ້ບໍ່? ເປັນຫຍັງ? ໃຫ້ເວລາຕອບ. ກ່າວວ່າ, ພຣະເຢຊູບໍ່ມີຄວາມລະອາຍ ແລະຄວາມເຈັບປວດເພາະການຖ່ອມໃຈ. ການເສັຽສະລະຕົນເອງເພື່ອຄົນອື່ນ ຖືວ່າເປັນການສະແດງເຖິງຄວາມເຂັ້ມແຂງ. ບອກວ່າ: ໃນບົດຮຽນມື້ນີ້ພວກເຮົາຈະຮຽນຕິດຕາມແບບຢ່າງອັນດີເລີດຂອງພຣະຄຣິດເຣື່ອງການຖ່ອມຕົວຖ່ອມໃຈ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ເບິ່ງວິທີໂປໂລເນັ້ນເຣື່ອງຄວາມເປັນນ້ຳນຶ່ງໃຈດຽວໃນຄຣິສຕະຈັກໃນຈົດໝາຍຂອງທ່ານ. ຖາມ: ທ່ານຈະອະທິບາຍການເປັນນ້ຳນຶ່ງໃຈດຽວກັນຢ່າງໃດ? ໃຫ້ເວລາຕອບ. ອ່ານຟີລິບປອຍ 2:1-4. ສັງເກດເບິ່ງໂປໂລຊັກຊວນຄຣິສຕຽນໃຫ້ເປັນອັນນຶ່ງອັນດຽວກັນ. ພານັກຮຽນຊອກຫາກຸນແຈສຳລັບຄວາມສາມັກຄີມີຢູ່ສີ່ຢ່າງ ທີ່ໂປໂລຕ້ອງການຈາກຊາວເມືອງຟີລິບປອຍ. ໃຫ້ເວລາຊອກແລະຕອບ. ເບິ່ງບົດຮຽນໃນຫົວຂໍ້ "ໝູນໃຈໃຫ້ສາມັກຄີ." ສັງເກດວ່າໂປໂລຢາກໃຫ້ມີຄວາມເປັນນ້ຳນຶ່ງອັນດຽວກັນໃນຄວາມຄິດ, ຄວາມຮັກ, ຄວາມສາມັກຄີ, ແລະຈຸດປະສົງ (2:2). ການເປັນນ້ຳນຶ່ງໃຈດຽວອາດຈະແປໄດ້ວ່າແມ່ນການເປັນອັນດຽວກັນໃນທັສນະແລະຈຸດປະສົງ.

   ໃຫ້ຜູ້ນຶ່ງອ່ານ 1:5-8. ໃຊ້ບົດຮຽນສຳລັບພາກນີ້ເພື່ອອະທິບາຍ. ຂໍ້ສັງເກດ: ໂປໂລໄດ້ເວົ້າລາຍລະອຽດຊີວິດແລະການວາຍພຣະຊົນຂອງພຣະຄຣິດວ່າເປັນການຖ່ອມຕົວຂັ້ນເລີດສຸດ. ຖາມ: ເປັນຫຍັງໂປໂລຈຶ່ງເນັ້ນໃສ່ຈຸດການຕາຍ ເຊັ່ນທ່ານເວົ້າວ່າ "ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ?" ເບິ່ງບົດຄວາມເຣື່ອງ "ຄວາມລະອາຍຂອງໄມ້ກາງແຂນ." ເນັ້ນ: ພຣະຄຣິດຍອມຮັບການຕາຍແບບອັບອາຍ ເພື່ອພວກເຮົາຈະໄດ້ຄືນດີກັບພຣະເຈົ້າ.

ບອກວ່າ: ເມື່ອຜູ້ໃດຜູ້ນຶ່ງມາຫາພຣະຄຣິດ, ເຂົາເຈົ້າກໍໄດ້ມາຫາຜູ້ທີ່ຍອມຖ່ອມຕົວລົງເຖິງຂັ້ນໜ້າລະອາຍທີ່ສຸດ. ການຖ່ອມຕົວ, ຫລືການຖອດຕົວເອງ, ເປັນແບບຢ່າງສຳລັບການດຳເນີນຊີວິດຄຣິສຕຽນ.

3. ຖາມ: ທ່ານຄິດວ່າ ໂປໂລໝາຍເຖິງຫຍັງເວລາທ່ານບອກຄຣິສຕຽນໃຫ້ມີນ້ຳໃຈທີ່ມີຢູ່ໃນພຣະຄຣິດ (2:5)? ຫລັງຈາກໃຫ້ຄົນຕອບແລ້ວກ່າວວ່າ ພຣະຄຣິດຊົງເປັນຜູ້ມີຄວາມຖ່ອມຕົວ ແລະການເສັຽສະລະ. ພຣະລັກສະນະເຫລົ່ານີ້ເຮັດໃຫ້ພຣະອົງສາມາດປະຄວາມຍິນດີໃນຟ້າສວັນ ລົງມາໃນໂລກເພື່ອຕາຍແທນມະນຸດ. ການຖ່ອມຕົວ ແລະການເສັຽສະລະຈະຊ່ວຍພວກເຮົາໃຫ້ສາມາດເຮັດສິ່ງຍິ່ງໃຫຍ່ຜ່ານພຣະຄຣິດ. ໃນທີ່ສຸດ, ເບິ່ງຂໍ້ 9-11, ພຣະຄຣິດກໍຖືກຍົກຂຶ້ນ ເພາະພຣະອົງຍອມເຊື່ອຟັງພຣະບິດາ. ເຊັ່ນດຽວກັນ, ໃນທີ່ສຸດ, ພຣະຜູ້ເປັນເຈົ້າຈະຊົງໃຫ້ກຽດລູກຂອງພຣະອົງທັງຫລາຍສຳລັບຊີວິດທີ່ຖ່ອມຕົວແລະຊີວິດທີ່ເສັຽສະລະຂອງພວກເຂົາ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

4. ພານັກຮຽນເບິ່ງຄຳຖາມໃນພາກສຸດທ້າຍຂອງບົດຮຽນນີ້ ແລ້ວພານັກຮຽນຕອບຄຳຖາມທັງໝົດ.

5. ສັງເກດ: ໃນບົດຮຽນນີ້ໂປໂລເນັ້ນວ່າການທີ່ພຣະຄຣິດຖືກຄຶງເທິງໄມ້ກາງແຂນຈະຕ້ອງມີສ່ວນສຳຄັນໃນການດຳເນີນຊີວິດຂອງພວກເຮົາແຕ່ລະວັນ. ການຖ່ອມຕົວຂອງພຣະຄຣິດຄືແບບຢ່າງສຳລັບພວກເຮົາໃນການຕໍ່ສູ້ກັບອຸປສັກ ແລະຄວາມສຳເຣັດໃນຊີວິດ. ພວກເຮົາຈະຕ້ອງຖ່ອມຕົວໃນທຸກໂອກາດ. ຖາມ: ຖ້າສະພາບການຕໍ່ໄປນີ້ເກີດຂຶ້ນໃນຊີວິດ, ພວກທ່ານຈະຕອບຮັບຢ່າງໃດ?:

- ເວລາບັນຫາມາເຖິງຄອບຄົວຂອງພວກເຮົາ
- ເວລາມີຄົນໃສ່ຮ້າຍ ຫລືເວົ້າຂວັນພວກເຮົາ
- ເວລາສະມາຊິກໂບດຈົ່ມວ່າ ແລະບໍ່ເຫັນພ້ອມ
- ເວລາມີຄົນຕ້ອງການການເລົ້າໂລມ

ຢຸດ: ໃຫ້ເວລາຕອບແຕ່ລະສະພາບການເປັນຂໍ້ໆໄປ.

6. ພານັກຮຽນເບິ່ງວິທີທີ່ຈະຕອບຄຳຊັກຊວນຂອງບົດຮຽນໃນມື້ນີ້. ປິດການສຶກສາພຣະທັມດ້ວຍການອ້ອນວອນອະທິຖານ. ອ້ອນວອນໃຫ້ຄຣິສຕະຈັກມີນ້ຳໃຈທີ່ມີຢູ່ໃນພຣະຄຣິດ ແລະມີການເປັນນ້ຳນຶ່ງໃຈດຽວກັນ.

*ດຣ. ສີດນີ ຄານ*

# ບົດແນະນຳຄູສອນ
# ບົດຮຽນທີ 10
# ສແວງຫາເປົ້າໝາຍສູງສຸດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີລິບປອຍ 3:1-14

**ພູມຫລັງຂອງພຣະຄັມພີ:** ຟີລິບປອບ 3:1--4: 1

**ຈຸດສຳຄັນຂອງບົດຮຽນນີ້:** ຊີວິດຄຣິສຕຽນທີ່ສັດຊື່ແລະຊົມຊື່ນຍິນດີ ໝາຍເຖິງການສແວງຫາເປົ້າໝາຍທີ່ສູງສຸດ, ເປົ້າໝາຍຢາກຈະຮູ້ພຣະຄຣິດຢ່າງບໍຣິບູນ, ຈົນເຖິງຂັ້ນເປັນເໝືອນພຣະອົງໃນການທຸກທໍຣະມານແລະການຕາຍ.

ຄຳຖາມເພື່ອການຄົ້ນຄວ້າ: ທ່ານມີເປົ້າໝາຍໃນຊີວິດຢ່າງໃດແດ່ ທີ່ທ່ານກຳລັງສແວງຫາ?

ຈຸດປະສົງຂອງບົດຮຽນນີ້: ເພື່ອໝັ້ນໃຈວ່າເປົ້າໝາຍໃນຊີວິດຂ້ອຍແມ່ນການຢາກຮູ້ພຣະຄຣິດຢ່າງບໍຣິບູນ.

## ແຜນສຳລັບການສອນ

**ນຳພຣະທັມເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ຊວນນັກຮຽນໂອ້ລົມເຣື່ອງດາຣາ ຫລືນັກກິລາທີ່ມີຊື່ດັງ ຄວນລະວັງໃນການປະພຶດ ເພາະພວກເຂົາເຈົ້າມີສ່ວນໃນການຈູງໃຈຄົນໜຸ່ມ. ສັງເກດ: ຊີວິດຄຣິສຕຽນຂອງພວກເຮົາສອນຄົນອື່ນເຣື່ອງການດຳເນີນຊີວິດ. ຊີວິດຂອງພວກເຮົາສາມາດສອນຄົນອື່ນໃນທາງດີແລະທາງບໍ່ດີ.

   ເວົ້າວ່າ: ມື້ນີ້ພວກເຮົາຈະຮຽນຮູ້ວ່າ ຊີວິດຄຣິສຕຽນໝາຍເຖິງການສແວງຫາເປົ້າໝາຍສູງສຸດ ແລະພວກເຮົາຈະສົນທະນາກັນວ່າເປົ້າໝາຍສູງສຸດແມ່ນຫຍັງແທ້.

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

2. ໃຫ້ຜູ້ນຶ່ງອ່ານຟີລິບປອຍ 3:2, 18-19 ແລະໃຫ້ທຸກຄົນຟັງເບິ່ງຄວາມເຊື່ອ ແລະການປະພຶດຂອງພວກຄູສອນປອມທີ່ເມືອງຟີລິບປອຍ. ໃຫ້ບາງຄົນຕອບ.

   ໃຫ້ອີກຜູ້ນຶ່ງອ່ານຟີລິບປອຍ 3:7-14 ແລະໃຫ້ທຸກຄົນຟັງເບິ່ງຄວາມເຊື່ອຂອງອັຄສາວົກໂປໂລ.

   ອ່ານຟີລິບປອຍ 3: 9 ແລະສັງເກດເບິ່ງຄຳເວົ້າຂອງໂປໂລທີ່ວ່າ "ບໍ່ມີຄວາມຊອບທັມໃນເຮົາເອງ ຊຶ່ງໄດ້ມາໂດຍພຣະບັນຍັດ..." ສັງເກດ: ຄຳສອນຂອງໂປໂລແຕກຕ່າງຈາກຄຳສອນຂອງຄູສອນປອມ ເພາະທ່ານບໍ່ໄດ້ສັ່ງສອນຄຸນຄ່າຂອງຕົວເອງ ຫລືຄວາມຊອບທັມຂອງຕົວເອງ. ໂປໂລສອນວ່າຄວາມລອດພົ້ນໄດ້ມາເພາະໄມ້ກາງແຂນຂອງພຣະຄຣິດ ແລະການຊົງຄືນພຣະຊົນ.

3. ອ່ານ 3: 7-11. ຖາມ: ພຣະທັມຕອນນີ້ກ່າວເຖິງພຣະຄຣິດຈັກເທື່ອ) ໃຫ້ເວລາຕອບ. ຖາມ: ໂປໂລໄດ້ຫຍັງແດ່ເພາະການຮູ້ຈັກພຣະຄຣິດ? (ຂໍ້ 11). ຫລາຍຄົນເອີ້ນຄວາມເຊື່ອຂອງໂປໂລວ່າ ແມ່ນການໃຫ້ພຣະຄຣິດເປັນຈຸດສູນກາງໃນທຸກຢ່າງ. ໂປໂລເພິ່ງພຣະຄຣິດໃນທຸກງສິ່ງທີ່ທ່ານຕ້ອງການ.

ຖາມ: ທ່ານເຊື່ອວ່າເປັນຫຍັງໂປໂລຈຶ່ງໃຫ້ພຣະຄຣິດເປັນສູນກາງໃນທຸກຢ່າງທີ່ມີຄຸນຄ່າຂອງທ່ານ? ບາງຄົນອາດຈະຕອບວ່າ ໂປໂລຢາກໄປສວັນ; ແນະນໍາ: ໂປໂລຮູ້ວ່າພຣະຄຣິດເປັນທາງໄປສູ່ສວັນ ແຕ່ທ່ານໄດ້ເຮັດທຸກຢ່າງເພາະຄວາມຮັກຕໍ່ອົງພຣະຄຣິດ.

4. ອ່ານຂໍ້ 10. ເວົ້າວ່າ: ໂປໂລຕ້ອງການຮູ້ຈັກພຣະຄຣິດ; ທ່ານເວົ້າເຖິງສອງທາງທີ່ທ່ານປະສົງຄື: (1) ຣິດອໍານາດອັນປະກົດໃນການຄືນພຣະຊົນ, (2) ການຮ່ວມທຸກກັບພຣະອົງ ການຍອມຮັບຄວາມຕາຍເໝືອນຢ່າງພຣະອົງ. ສິ່ງເຫລົ່ານີ້ໝາຍເຖິງຄວາມເລິກເຊິ່ງຂອງການຍອມຖວາຍຕົວໃຫ້ພຣະຄຣິດ ຂອງໂປໂລ.

5. ສັງເກດ: ໂປໂລຕ້ອງການທີ່ຈະໄປເຖິງຄວາມສໍາເຣັດໃນພຣະຄຣິດ; ສະນັ້ນທ່ານຈຶ່ງ "ມຸ້ງໜ້າ" ຕໍ່ໄປ (3:12, 14) ເພື່ອຈະໃຫ້ເຖິງຫລັກຊັຍ.

ອ່ານ 3:13-14 ແລະໃຫ້ທຸກຄົນສັງເກດເບິ່ງເປົ້າໝາຍ ແລະການກະທໍາຂອງໂປໂລ. ເນັ້ນ: ລືມສິ່ງທີ່ຜ່ານມາ (ຄວາມຄິດເກົ່າ, ຄຸນຄ່າເກົ່າ) ແລະ ໂນ້ມຕົວອອກໄປຫາສິ່ງທີ່ຢູ່ເບື້ອງໜ້າ (ການຊົງເອີ້ນໃຫ້ໄປຮັບຢູ່ເບື້ອງເທິງຂອງພຣະຄຣິດ). ການເຕີບໃຫຍ່ຝ່າຍຈິດວິນຍານເກີດຂຶ້ນເມື່ອພວກເຮົາປັກຕາໃສ່ພຣະຄຣິດ ແລະບໍ່ຍອມຫລຽວຫລັງກັບຫາສິ່ງເກົ່າໆທີ່ຜ່ານມາອີກ.

<u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ພານັກຮຽນຕອບຄໍາຖາມທຸກຂໍ້ໃນພາກສຸດທ້າຍຂອງບົດຮຽນ. ໃຊ້ເວລາສົນທະນາຕາມສົມຄວນ.

7. ຊັກຊວນທຸກຄົນໃຫ້ລະວັງການຊອບທັມທີ່ເຮັດດ້ວຍຕົວເອງ. ເຕືອນ: ພວກເຮົາຢ່າໄປເພີ່ມຫຍັງໃສ່ ພຣະຄຣິດ ແລະໄມ້ກາງແຂນຂອງພຣະອົງ. ພຣະເຈົ້າໃນອົງພຣະຄຣິດເທົ່ານັ້ນຄືຫົນທາງສູ່ຄວາມລອດພົ້ນຂອງມະນຸດ.

8. ຖາມ: ພວກເຮົາຈະເຮັດຢ່າງໃດເພື່ອຈະໝັ້ນໃຈວ່າຄຸນຄ່າຂອງພວກເຮົາແມ່ນມາຈາກພຣະຄຣິດ ແລະບໍ່ແມ່ນມາຈາກຄຸນຄ່າຂອງໂລກນີ້? ໃຫ້ເວລາຕອບ. ຖາມ: ຄອບຄົວ ຄຣິສຕະຈັກ ແລະທີ່ທໍາງານຂອງພວກເຮົາຈະເປັນໃນລັກສະນະໃດ ຖ້າທຸກຄົນຮູ້ຈັກພຣະຄຣິດຢ່າງແທ້ຈິງ? ໃຫ້ເວລາຕອບ. ຊັກຊວນທຸກຄົນໃຫ້ສແວງຫາການຮູ້ຈັກພຣະຄຣິດແບບບໍຣິບູນ ໂດຍສະເພາະແມ່ນເຣື່ອງຣິດອໍານາດອັນປາກົດໃນການຊົງຄືນພຣະຊົນ ຫລືບາງທີອາດຈະເປັນ ການມີສ່ວນຮ່ວມທຸກກັບພຣະອົງ.

9. ຖາມ: ເປົ້າໝາຍຊີວິດຂອງທ່ານຢູ່ລໍາດັບໃດເມື່ອປຽບທຽບໃສ່ເປົ້າໝາຍຊີວິດຂອງໂປໂລ? ຂອງໃຜຢູ່ສູງກວ່າ? ຊັກຊວນໃຫ້ທຸກຄົນຕັ້ງເປົ້າໝາຍຊີວິດທີ່ການຮູ້ຈັກພຣະຄຣິດຢ່າງບໍຣິບູນ. ອ້ອນວອນປິດການສຶກສາພຣະທັມໂດຍໃຊ້ຄວາມຄິດນີ້ເປັນຫລັກ.

*ດຣ. ສິດນີ ຄານ*

## <u>ບົດແນະນຳຄູສອນ</u>

## <u>ບົດຮຽນທີ 11</u>

## <u>ຊົມຊື່ນຍິນດີໃນພຣະເຈົ້າ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຟີລິປອຍ 4:4-20

**<u>ພູມຫລັງຂອງພຣະຄັມພີ:</u>** ຟີລິປອຍ 4:4-20

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເພື່ອເຮົາຈະຮຽນຮູ້ໃນການຊື່ນຊົມຍິນດີໃນພຣະເຈົ້າໃຫ້ຫລາຍ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະມີຄວາມຍິນດີໄດ້ຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອອາທິບາຍເຣື່ອງຄວາມຊື່ນຊົມຍິນດີຢ່າງແທ້ຈິງ.

### <u>ບົດນຳ</u>

ເຮົາເຫັນພວກເສດຖີມີເງິນພາກັນຫຍຸ້ງຍາກຈົນບໍ່ມີເວລາພັກຜ່ອນຈາກວຽກງານຂອງເຂົາເຈົ້າ, ຫລາຍຄົນມີເງິນຄຳແລະຊັບສົມບັດອັນມະຫາສານຍັງຂາດຄວາມຊົມຊື່ນຍິນດີໃນຊີວິດ ທັງນີ້ກໍເພາະວ່າຄວາມຊົມຊື່ນຍິນດີນັ້ນບໍ່ຂຶ້ນກັບຄວາມຮັ່ງມີ ແຕ່ມັນຂຶ້ນຢູ່ກັບຈິດໃຈ ຫລືຄວາມພໍໃຈນັ້ນເອງ. ວັນນີ້ເຮົາຈະເບິ່ງຊີວິດຂອງໂປໂລທີ່ເຄີຍເປັນເຈົ້ານາຍແລະມີເງິນຄຳ ແຕ່ດຽວນີ້ບໍ່ມີອີກແລ້ວແຖມຍັງຕິດຄຸກຍ້ອນການເຮັດດີຂອງເພິ່ນ ແຕ່ເພິ່ນກໍມີຄວາມ ຊົມຊື່ນຍິນດີ. ແມ່ນຫຍັງຄືເຄັດລັບໃນການຊົມຊື່ນຍິນດີນັ້ນເຮົາຈະພາກັນຄົ້ນຄວ້ານຳກັນ.

### <u>ຊັກຊວນໃຫ້ຊົມຊື່ນຍິນດີ</u> 4:4-7

ຫລາຍເທື່ອເຮົາໄດ້ຍິນຄົນເວົ້າວ່າສາສນາໃດກໍດີໝົດສຸດແລ້ວແຕ່ຜູ້ຈະເຊື່ອວ່າຊັ້ນ, ຄຣິສຕຽນກໍເຂົ້າໃຈຄ້າຍຄືກັນກັບຄົນທົ່ວໄປ, ສາສນາໃດກໍດີໝົດແທ້ ແຕ່ອົງພຣະເຢຊູຄຣິດບໍ່ແມ່ນຜູ້ນຳສາສນາ ແລະຄົນທີ່ເຊື່ອໃນພຣະເຢຊູຄຣິດນັ້ນບໍ່ແມ່ນເຊື່ອສາສນາ ແຕ່ແມ່ນເຊື່ອໃນພຣະເຈົ້າອົງທ່ຽງແທ້ແຕ່ອົງດຽວທີ່ນຳຄວາມລອດພົ້ນມາສູ່ມວນມະນຸດ, ສາສນາໃນໂລກແມ່ນພາກັນຊອກສແວງຫາທາງແຫ່ງຄວາມລອດພົ້ນຈາກຄວາມຜິດບາບນັ້ນແລ້ວ ດັ່ງນັ້ນເມື່ອຄຣິສຕຽນມາເຊື່ອໃນພຣະເຢຊູແລ້ວຈຶ່ງກາຍມາເປັນຄຣິສຕຽນ ຄຳວ່າ ເປັນ ແມ່ນເກີນກວ່າຄວາມເຊື່ອ, ຄືຄົນອື່ນເຊື່ອໃນສາສນາ. ດ້ວຍເຫດນີ້ໂປໂລຈຶ່ງຊັກຊວນໃຫ້ຄຣິສຕຽນມີຄວາມຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າທຸກເວລາ (ຂໍ້ 4).

ການຊົມຊື່ນຍິນດີທຸກເວລາເປັນການເຮັດຍາກທີ່ສຸດ ເພາະຄົນເຮົາມີມື້ດີແລະມື້ບໍ່ດີຫາກເຮົາເອົາໃຈໃສ່ໃນເຣື່ອງເກີດຂຶ້ນກັບເຮົາ ໂດຍສເພາະແມ່ນຮ່າງກາຍທີ່ເຈັບເປັນ *"ພຣະອົງຈະຊົງປ່ຽນແປງຮ່າງກາຍອັນຕໍ່າຕ້ອຍຂອງພວກເຮົາໃຫ້ເປັນເໝືອນພຣະກາຍອັນຊົງສະງ່າຣາສີຂອງພຣະອົງ ດ້ວຍຣິດທານຸພາບຊຶ່ງເຮັດໃຫ້ພຣະອົງຊົງປາບສາຣະພັດລົງໃຕ້ບັງຄັບຂອງພຣະອົງ"* (3:21). ໂປໂລຍັງບອກອີກວ່າພຣະເຈົ້າຊົງຢູ່ໃກ້ (ຂໍ້ 5).

ປະເດັນທີ່ສຳຄັນອີກຕອນນີ້ງໂປໂລກ່າວວ່າ *"ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ ແລະການອ້ອນວອນຂໍ ພ້ອມກັບການຂອບພຣະຄຸນແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູ ຄຣິດ"* (ຂໍ້ 6-7). ແປວ່າແທນທີ່ເຮົາຈະທຸກອົກທຸກໃຈແລ້ວກະວົນກະວາຍນຳເຣື່ອງລາວຕ່າງໆທີ່ເກີດຂຶ້ນນັ້ນ ຈົ່ງ

ຖ່ອມໃຈອ້ອນວອນອະທິຖານກໍດີກວ່າ ແລ້ວສັນຕິສຸກຊຶ່ງມາຈາກພຣະເຈົ້າເກີນກວ່າຄວາມເຂົ້າໃຈຈະຊ່ອຍຈິດໃຈຂອງທ່ານໃຫ້ມີຄວາມຊຶມຊື່ນຍິນດີ, ສັນຕິສຸກທີ່ໂປໂລກ່າວມານັ້ນມັນເກີນກວ່າມະນຸດຈະເຂົ້າໃຈໄດ້.

<u>ຈິດຈໍ່ຕໍ່ສັນຕິສຸກ</u> 4:8-9

ໃນການຈິດຈໍ່ຕໍ່ສັນຕິສຸກນີ້ໂປໂລໄດ້ສະແດງຕົວເປັນຜູ້ຊຶມຊື່ນຍິນດີຮ່ວມກັບພີ່ນ້ອງຟີລິບປອຍແລ້ວໃນຂໍ້ 1 ສ່ວນ ຂໍ້ 8 ໂປໂລໄດ້ຂຽນເປັນລາຍການ 8 ຢ່າງຄື; 1. *ສິ່ງທີ່ສັດຈິງ* 2. *ສິ່ງໃດທີ່ໜ້ານັບຖື* 3. *ສິ່ງໃດທີ່ຍຸດຕິທັມ* 4. *ສິ່ງໃດທີ່ບໍຣິສຸດ* 5. *ສິ່ງທີ່ໜ້າຮັກ* 6. *ສິ່ງໃດທີ່ໜ້າຍິນດີ* 7. *ສິ່ງທີ່ລ້ຳເລີດ* 8. *ແລະຖ້າມີສິ່ງໃດທີ່ຄວນແກ່ການສັຣເສີນ ຈົ່ງພິຈາຣະນາເຖິງສິ່ງເຫລົ່ານີ້.*

ໂປໂລກ່າວວ່າພີ່ນ້ອງຟີລິບປອຍວ່າພວກເຂົາເປັນເໝືອນພວງມາລັຍຄ້ອງຄໍຂອງເພິ່ນ ຄຳວ່າພວງມາລັຍຄ້ອງຄໍນັ້ນມີຄວາມໝາຍວ່າໂປໂລໄດ້ຮັບກຽດຍ້ອນພີ່ນ້ອງເມືອງຟີລິບປອຍທີ່ໄດ້ຮ່ວມງານຮັບໃຊ້ມາແຕ່ເລີ້ມແຮກ, ພວງມາລັຍໃນສມັຍນັ້ນໃຊ້ຄ້ອງຄໍຕ້ອນຮັບແຂກຜູ້ມີກຽດ, ຄ້ອງຄໍຜູ້ຊະນະໃນດ້ານການກິລາ ມັນຄ້າຍຄື ໂຕຣຟີ ທີ່ໃຊ້ກັນໃນຕ່າງປະເທດ. ດ້ວຍເຫດນີ້ໂປໂລຈຶ່ງຮຽກຮ້ອງໃຫ້ພີ່ນ້ອງຟີລິປອຍໃຫ້ມີໃຈຈິດຈໍ່ຕໍ່ສັນຕິສຸກທີ່ຈະມານັ້ນຫລາຍກວ່າບັນຫາຊີວິດໃນເວລານີ້.

<u>ເຕັມໃຈທຸກສະພາບການ</u> 4:10-13

ມັນເປັນການຍາກທີ່ຈະໃຫ້ຜູ້ໃດຜູ້ນຶ່ງພໍໃຈກັບທຸກສິ່ງທີ່ເກີດຂຶ້ນໃນຕົນເອງ, ການໄດ້ຫຍັງມາຄັ້ງແຮກກໍພໍໃຈຢູ່ ຕໍ່ມາບໍ່ນານກໍຢາກໄດ້ແນວໃໝ່ໄປເລື້ອຍໆບໍ່ຮູ້ຈັກອີ່ມໃຈຈັກເທື່ອ. ຄົນເຮົາເປັນທຸກເປັນຍາກທຸກວັນນີ້ກໍຍ້ອນບໍ່ອີ່ມໃຈນັ້ນແລ້ວ, ຫາກເຮົາບໍ່ຮຽນຮູ້ຈັກຄວາມອີ່ມໃຈຫລືບໍ່ເຕັມໃຈໃນສະພາບຂອງເຮົາເອງແລ້ວເຮົາກໍຈະທຸກໃຈໄປຈົນວັນຕາຍພຸ້ນແລ້ວ. ໂປໂລໄດ້ພັລະນາເຖິງຊີວິດຂອງເພິ່ນເຄີຍສນຸກສຸກສຳບາຍ, ໃນຍາມທຸກຍາກຂາດເຂີນເພິ່ນກໍທົນຢູ່ໄດ້ດ້ວຍວ່າເພິ່ນຮຽນຮູ້ຈັກກັບຄວາມພໍໃຈກັບທີ່ຈະຢູ່ກັບການທີ່ເກີດຂຶ້ນໃນຊີວິດ, ການຮຽນຮູ້ຈັກຍອມຮັບຂອງເພິ່ນນັ້ນບໍ່ແມ່ນເພິ່ນອາສັຍກຳລັງວັງຊາຂອງເພິ່ນເອງເພິ່ນສາຣະພາບວ່າເປັນກຳລັງວັງຊາມາຈາກພຣະເຈົ້າ. ໂດຍອາສັຍກຳລັງທີ່ມາຈາກພຣະເຈົ້ານັ້ນ ເຮັດໃຫ້ເພິ່ນເຕັມໃຈກັບທຸກສະພາບການທີ່ເກີດຂຶ້ນໃນຊີວິດຂອງເພິ່ນແມ່ນແຕ່ຢູ່ ໃນຄຸກກໍເຕັມໃຈ ເພາະເພິ່ນເຂົ້າໃຈວ່າພຣະເຈົ້າຊົງຢູ່ໃກ້ແລະຊົງມີແຜນການສຳລັບເຫດການນັ້ນ.

<u>ເຫັນຄວາມຮັກຈາກຟີລິບປອຍ</u> 4:14-20

ໂປໂລບໍ່ໄດ້ຍິນດີກັບຂອງຝາກ (ເງິນ) ທີ່ພີ່ນ້ອງຄຣິສຕຽນເມືອງຟີລິປອຍ ແຕ່ໄດ້ຍິນດີກັບຄວາມຮັກທີ່ເຂົາມີຕໍ່ເພິ່ນໃນພຣະນາມແຫ່ງພຣະເຢຊູຄຣິດ ດ້ວຍເຫດນີ້ເພິ່ນຈຶ່ງກ່າວວ່າ "*ບໍ່ໃຊ່ວ່າເຮົາປາຖນາຈະໄດ້ຮັບຂອງທານຈາກເຈົ້າທັງຫລາຍ*" ບໍ່ໄດ້ໝາຍຄວາມວ່າເພິ່ນບໍ່ຢາກຮັບຂອງຝາກນັ້ນ, ໃນໃຈຂອງເພິ່ນຢາກໃຫ້ພີ່ນ້ອງມີຫລາຍກວ່າເກົ່າຈຶ່ງເວົ້າວ່າ "*ແຕ່ເຮົາປາຖນາຢາກໃຫ້ພວກເຈົ້າໄດ້ຜົນກຳໄລເພີ້ມຂຶ້ນໃນບັນຊີຂອງພວກເຈົ້າ*" ເມື່ອມາເຖິງຕອນນີ້ເຮົາຈຶ່ງເຂົ້າໃຈວ່າໂປໂລພໍໃຈໃນຄວາມຮັກຫລາຍກວ່າຂອງຝາກ. ໂປໂລກ່າວວ່າການເຮັດດັ່ງນີ້ພຣະເຈົ້າພໍພຣະ ທັຍ. ຄຳວ່າພຣະເຈົ້າພໍພຣະທັຍມີຄວາມໝາຍວ່າພຣະເຈົ້າຈະຊົງອວຍພອນເພື່ອຕອບສນອງການກະທຳຂອງເຂົາ.

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 12
# ພຣະເຢຊູເປັນພຣະເຈົ້າອົງສູງສຸດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂກໂລຊາຍ 1:15:-23

**ພູມຫລັງຂອງພຣະຄັມພີ:** ໂກໂລຊາຍ 1:1-23

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູເປັນພຣະເຈົ້າອົງສູງສຸດທີ່ປາກົດຕົວ, ເປັນພຣະຜູ້ຊົງສ້າງ, ເປັນປະມຸກຂອງຄຣິສຕະຈັກ, ເປັນຜູ້ນຳສັນຕິສຸກຈາກພຣະເຈົ້າມາສູ່ໂລກ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະເວົ້າໄດ້ຢ່າງໃດວ່າພຣະເຢຊູເປັນພຣະເຈົ້າເໜືອສາສນາ

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າພຣະອົງມີຄວາມໝາຍຫຍັງສຳລັບຂ້ອຍ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

## ບົດນຳ

ໃນປີທີ 62 ຫລັງຈາກພຣະເຢຊູສເດັດກັບຄືນສວັນແລ້ວ ພວກສາສນາຢິວ, ພວກນັກທັມຟາຣີຊາຍໄດ້ພະຍາຍາມເສກສັນປັ້ນແຕ່ງຊອກເຣື່ອງໃຫ້ຄຣິສຕຽນເມືອງໂກໂລຊາຍມີການສົງສັຍໃນເຣື່ອງຂອງພຣະເຢຊູຄຣິດ. ຄຣິສຕຽນໃນເມືອງນີ້ແມ່ນຜົນການປະກາດຂອງທ່ານເອປາຟາ (ຂໍ້ 1:7). ສ່ວນໂປໂລເມື່ອໄດ້ຍິນເຣື່ອງຄວາມເຊື່ອຂອງຄຣິສຕຽນເມືອງນີ້ຖືກລົບກວນຈາກຟາຣີຊາຍຈຶ່ງຂຽນຈົດໝາຍເຖິງຄຣິສຕະຈັກເມືອງໂກໂລຊາຍ ເພື່ອເລົ້າໂລມໃຈເຂົາໃຫ້ໝັ້ນຄົງໃນພຣະເຈົ້າໂດຍບໍ່ໃຫ້ຫລົງເຊື່ອຟັງຄຳຂອງພວກນັກທັມຟາຣີຊາຍ, ໂປໂລເລີ້ມຕົ້ນກັບເຂົາດັ່ງນີ້:

### ພຣະເຢຊູພຣະຜູ້ສ້າງ 1:15-17

1. ໂປໂລອະທິບາຍພຣະລັກສະນະຂອງພຣະເຈົ້າວ່າ *"ພຣະອົງຊົງເປັນແບບລັກສະນະຂອງພຣະເຈົ້າ ຜູ້ຊຶ່ງຕາເຫັນບໍ່ໄດ້* (ຂໍ້ 15) ເບິ່ງການຂຍາຍຄວາມໃນບົດຮຽນ.

2. *"ຊົງເປັນບຸດແຣກເໜືອສາຣະພັດທີ່ຊົງບົງຣະມິດສ້າງຂຶ້ນນັ້ນ"* ເບິ່ງການຂຍາຍຄວາມໃນບົດຮຽນ.

3. *"ພຣະເຈົ້າໄດ້ຊົງສ້າງສັພສິ່ງຂຶ້ນ"* (ຂໍ້ 16) ພຣະເຢຊູຊົງເປັນພຣະເຈົ້າແຕ່ຕົ້ນເດີມມາ ແລະຊົງສ້າງສັພສິ່ງ ແປວ່າທຸກສິ່ງທີ່ຕາເຫັນແລະບໍ່ເຫັນແມ່ນພຣະອົງຊົງເປັນຜູ້ສ້າງຕລອດເຖິງສິ່ງທີ່ຟາຣີຊາຍອ້າງເຖິງອີກ.
4. *"ພຣະອົງຊົງເປັນຢູ່ກ່ອນສິ່ງສາຣະພັດ ແລະສິ່ງສາຣະພັດນັ້ນເປັນຣະບຽບຢູ່ໂດຍພຣະອົງ"* (ຂໍ້ 17) ແປວ່າບໍ່ມີໃຜ

ສ້າງພຣະອົງ, ຊົງຢູ່ກ່ອນການເວລາແລະສັພສິ່ງ ແລະສັພສິ່ງພຣະອົງວາງຣະບຽບໄວ້ແລ້ວບໍ່ມີໃຜຍ້າຍມັນໄດ້. ທັງໝົດນີ້ມີຄວາມໝາຍວ່າ ພຣະເຢຊູຊົງເປັນພຣະເຈົ້າ, ຊົງເປັນພຣະຜູ້ສ້າງ ແລະຊົງເປັນພຣະເຈົ້າແຕ່ອົງດຽວເທົ່ານັ້ນ, ສິ່ງອື່ນໆທີ່ມີຂຶ້ນເຮັດໃຫ້ມະນຸດນັບຖືແມ່ນຜົນການສ້າງຂອງພຣະອົງເອງ.

## ຊົງເປັນປະມຸກຂອງຄຣິສຕະຈັກ 1:18-19

1. ຄຳວ່າຄຣິສຕະຈັກເປັນຄຳເຊື່ອມໂຍງສອງຄຳເວົ້າຄື: 1. *ຄຣິດ* ເປັນນາມມະຍົດຂອງພຣະເຢຊູ ແລະຄຳວ່າ *ຄຣິດ* ມາຈາກຄຳວ່າ *ພຣະເຢຊູຄຣິດ.* 2. *ຕະຈັກ* ມາຈາກຄຳວ່າ *ອານາຈັກ* ເມື່ອຄຳເວົ້າສອງຄຳມາປະສົມກັນແລ້ວຈະອອກສຽງວ່າ ***ຄຣິສຕະຈັກ*** ແປວ່າອານາຈັກຂອງພຣະເຢຊູຄຣິດ ຫລືທີ່ຊຸມນຸມ, ທີ່ປະຊຸມ, ທີ່ນະມັສການຂອງບຸກຄົນທີ່ເຊື່ອໃນພຣະເຢຊູຄຣິດ.

2. ເມື່ອເປັນຄຣິສຕະຈັກເປັນອານາຈັກຂອງພຣະເຢຊູຄຣິດແລ້ວ ພຣະເຢຊູຄຣິດເອງກໍສົມຄວນເປັນປະມຸກຂອງທຸກຄຣິສຕະຈັກ. <u>ໝາຍເຫດ:</u> ໃນຄຳອະທິບາຍສັບສຳຄັນຫລັງປຶ້ມພຣະຄັມພີ ໄດ້ສະກົດວ່າ ***ຄຣິສຕະຈັກ*** ແຕ່ຫລາຍຄົນພະຍາຍາມຕັດຄຳເວົ້າໃຫ້ສັ້ນລົງເພື່ອການອອກສຽງງ່າຍ ຈາກຄຳວ່າ ***ຄຣິສຕະຈັກ*** ມາເປັນ *ຄຣິສຈັກ.*

3. ພຣະເຢຊູບໍ່ໄດ້ປ່ອຍປະລະເລີຽໃຫ້ຄຣິສຕະຈັກຂອງພຣະອົງເສົ້າໝອງ ແຕ່ເປັນປະມຸກ, ເປັນສີສະ (ຫົວ) ຂອງຄຣິສຕະຈັກຂອງພຣະອົງ (ໃຫ້ຄຣູອະທິບາຍ ເຣື່ອງຫົວຣົດໄຟແລະຕູ້ຣົດໄຟມີຄວາມສັມພັນກັນ).

## ຊົງເປັນພຣະເຈົ້າຂອງຜູ້ເຊື່ອ 1:20-23

1. ຄຳວ່າ ຄຣິສຕະຈັກມີຄວາມໝາຍສອງຢ່າງຄື: 1. ຮ່າງກາຍຂອງຜູ້ເຊື່ອທຸກຄົນ. 2. ຕຶກອາຄານໂບດ.

2. ພຣະອົງຊົງເປັນພຣະເຈົ້າຂອງຄຣິສຕຽນທຸກຄົນມີຄວາມໝາຍວ່າ ທຸກຄົນທີ່ເຊື່ອໃນພຣະເຢຊູຄຣິດແມ່ນເຊື່ອໃນພຣະເຈົ້າອົງດຽວກັນ, ເປັນພີ່ນ້ອງກັນໃນພຣະເຢຊູຄຣິດ. ໃນປະຫວັດສາດພວກກະສັດຫລືປະມຸກຂອງກຸ່ມຄົນເປັນຜູ້ອອກໜ້າໃນການຕໍ່ສູ້ເສິກສົງຄາມ ດັ່ງເຮົາມີພຣະເຢຊູຄຣິດຜູ້ຊົງເປັນປະມຸກຂອງພວກເຮົາຈະນຳໜ້າເຮົາສເມີ ເວລານີ້ເຮົາກຳລັງຕໍ່ສູ້ກັບມານຮ້າຍທີ່ພະຍາຍາມແບ່ງແຍກ, ຟາຣີຊາຍທີ່ກຳລັງປັ່ນປ່ວນ ໂປໂລກ່າວວ່າ *"ພຣະອົງໄດ້ຊົງບັນດານໃຫ້ເກີດສັນຕິພາບດ້ວຍພຣະໂລຫິດ"* (ຂໍ້ 20). ແປວ່າພຣະອົງຍອມຕາຍແທນ.

3. ຂໍ້ 22-23 ບອກວ່າເມື່ອກ່ອນເຮົາຖືກແຍກຍ້ອນຊາຕານທີ່ຕົວຍົວະໃຫ້ເຮົາເຮັດບາບ ເວລານີ້ເຮົາທັງຫລາຍບໍ່ມີບາບແລ້ວໂດຍການຊຳຮະລ້າງໂດຍພຣະໂລຫິດພຣະເຢຊູຄຣິດ, ໂປໂລໃຊ້ຄຳວ່າຂ່າວປະເສີດແທນພຣະເຢຊູຄຣິດທັງນີ້ກໍເພາະວ່າພຣະເຢຊູຄຣິດແມ່ນຂ່າວປະເສີດ. ດັ່ງນັ້ນໂປໂລຈຶ່ງເຕືອນສະຕິພີ່ນ້ອງເມືອງໂກໂລຊາຍບໍ່ໃຫ້ຫລົງເຊື່ອຟັງຄຳຕົວະຍົວະຂອງພວກຄຣູສອນປອມ.

*ດຣ. ທຸນພັນ ວົງສຸຣິດທ໌*

## ບົດແນະນຳຄຣູສອນ
## ບົດຮຽນທີ 13
## ໝັ້ນຄົງໃນຄວາມເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂກໂລຊາຍ 2:6-23

**ພູມຫລັງຂອງພຣະຄັມພີ:** ໂກໂລຊາຍ 2:6-23

**ຈຸດສຳຄັນຂອງບົດຮຽນນີ້:** ເຊື່ອພຣະເຢຊູຢ່າງຈິງໃຈໂດຍບໍ່ອຽງຝ່າຍໂລກ

**ຄຳຖາມເພື່ອການຄົ້ນຄວ້າ:** ພຣະເຢຊູຊົງເປັນທຸກຢ່າງ ເປັນຫຍັງຈຶ່ງຕ້ອງການແນວອື່ນອີກ.

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນເຮົາໃຫ້ເຂົ້າໃຈວ່າ ມີພຣະເຢຊູກໍມີໝົດແລ້ວ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

### ບົດນຳ

ເຮົາຮູ້ແລ້ວວ່າໂປໂລບໍ່ໄດ້ເປັນຜູ້ປະກາດ ແລະບໍ່ໄດ້ເປັນຜູ້ສ້າງໂບດເມືອງໂກໂລຊາຍ ແລະຍັງບໍ່ເຄີຍໄປເມືອງນີ້ອີກ ແມ່ນທ່ານ ເອປາຟາ (1:7) ເປັນຜູ້ປະກາດແລະສ້າງໂບດຫລັງນີ້ຕັ້ງແຕ່ທຳອິດ, ມາເຖິງເວລານີ້ພວກເຂົາມີບັນຫາເຣື່ອງຄວາມເຊື່ອຖືກລົບກວນ ສ່ວນໂປໂລກໍບໍ່ໄດ້ຈຳແນກວ່າເປັນເປັນຜົນງານຂອງທ່ານ ເອປາຟາ ເພາະ ໂປໂລເຂົ້າໃຈວ່າທ່ານເອປາຟາກໍເປັນຜູ້ຮັບໃຊ້ພຣະເຈົ້າອົງດຽວກັນ ຈຶ່ງຂຽນຈົດໝາຍມາຍັງຄຣິສຕະຈັກໂກໂລຊາຍດ້ວຍຄວາມຫ່ວງໃຍ ແລະຊັກຊວນເຂົາໃຫ້ເຮັດດັ່ງຕໍ່ໄປນີ້;

### ມີພຣະເຢຊູ ເຮົາກໍມີໝົດ 2:6-15

**ກ. ຄຳສັ່ງ ຂໍ້ 6-7**

ເພື່ອຄວາມສົມບູນໃນການເປັນຄຣິສຕຽນໂປໂລໄດ້ສັ່ງມາທາງ ຈົດໝາຍໃນດັ່ງນີ້; 1. ໃຫ້ເຂົ້າໃຈວ່າທ່ານທັງຫລາຍເປັນຄົນບັງເກີດໃນພຣະເຢຊູຄຣິດແລ້ວ ໃນເວລາທີ່ທ່ານຮັບເຊື່ອ. 2. ຈົ່ງດຳເນີນຊີວິດຢູ່ໃນພຣະອົງແປວ່າປະຕິບັດຕົນຕາມແບບຢ່າງຫລືມີຊີວິດປະຈຳວັນໃນພຣະອົງ. 3. ຢັ່ງຮາກແລະກໍ່ສ້າງຂຶ້ນໃນພຣະອົງ. 4. ຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອ. 5. ຈິດໃຈເຕັມລົ້ນດ້ວຍການຂອບພຣະຄຸນ.

**ຂ. ຄຳເຕືອນ ຂໍ້ 8-16**

1. ຢ່າຕົກເປັນເຫຍື່ອສະຕິປັນຍາຂອງໂລກ. 2. ທ່ານທັງຫລາຍມີບໍຣິບູນໃນພຣະຄຣິດແລ້ວ ແລະພຣະຄຣິດຊົງເປັນອຳນາດເໜືອສາຣະພັດ ຈຶ່ງບໍ່ສົມຄວນຈະຊອກເຮັດແນວອື່ນອີກ.

**<u>ຢ່າໃຫ້ຜູ້ໃດດູຖູກທ່ານ</u> 2:16-18ກ**

ກ. ຢ່າໃຫ້ຜູ້ໃດກ່າວໂທດທ່ານໃນເຣື່ອງການກິນແລະດື່ມ ແປວ່າການກິນລ້ຽງສລອງປັສຄາຕ່າງໆ ຕລອດເຖິງການເຜົາບູຊາຕາມວັນເດືອນປີທີ່ເຂົາຖືວ່າເປັນກົດໝາຍ, ແຕ່ພຣະເຢຊູຊົງເປັນກົດໝາຍທີ່ຄົບຖ້ວນ.

ຂ. ເຣື່ອງເທສການ, ເຣື່ອງວັນຕົ້ນເດືອນ ແມ່ນວັນຂຶ້ນ 1 ຄ່ຳ ທີ່ເຂົາປະຕິບັດກັນມານັ້ນ ໂປໂລບອກວ່າສິ່ງເຫລົ່ານັ້ນເປັນພຽງການປະຕິບັດຕາມເງົາຂອງພຣະຄຣິດເທົ່ານັ້ນ ເພາະວ່າພຣະຄຣິດເປັນເຈົ້າຂອງວັນສະບາໂຕ.

ຄ. ຢ່າໃຫ້ໃຜຍາດເອົາລາງວັນຂອງທ່ານ. ລາງວັນທີ່ໂປໂລກ່າວເຖິງແມ່ນຄວາມລອດພົ້ນ. ທຸກຄົນທີ່ເຊື່ອໃນອົງພຣະເຢຊູຄຣິດກໍໄດ້ຮັບຄວາມລອດພົ້ນເປັນລາງວັນ ດັ່ງນັ້ນຈົ່ງຮັກສາໃຫ້ດີ ຢ່າໃຫ້ໃຜຕົວະທ່ານໃຫ້ຫລົງຖິ້ມໄປຊື່ໆ.

**<u>ບໍ່ມີອຳນາດຍິ່ງໃຫຍ່ໄປກວ່າພຣະເຢຊູ</u> 2:18ຂ-23**

ກ. ພວກນັກປຣັສຍາ ແລະພວກນັກທັມຟາຣີຊາຍ ທຳຕົວເປັນຄືຄົນຖ່ອມຕົນ ແລະຂາບໄຫວ້ເທວະດາເພື່ອອວດອ້າງຄົນອື່ນວ່າເປັນຄົນດີມີສິນທັມ ເພື່ອຊັກຊວນຜູ້ອ່ອນທາງຄວາມເຊື່ອໃຫ້ຫລົງທາງຈາກພຣະເຈົ້າ. ຄຳສອນຂອງພວກເຂົານັ້ນໂປໂລຮ້ອງວ່າ ແມ່ນການສອນຕາມສະຕິປັນຍາຂອງໂລກ.

ຂ. ອ່ານ <u>ພຣະນິມິດ 22:8-9</u> ເຣື່ອງການຂາບໄຫວ້ເທວະດາວ່າສົມຄວນຫລືບໍ່?

ຄ. ທ່ານທັງຫລາຍຕາຍກັບພຣະຄຣິດມີຄວາມໝາຍວ່າ ຊີວິດເກົ່າ, ຖານະອັນເກົ່າໄດ້ລ່ວງກາຍໄປແລ້ວ ຫລືຕາຍໃນນ້ຳບັບຕິສະມາໃນພຣະນາມແຫ່ງພຣະເຢຊູຄຣິດແລ້ວທ່ານຈຶ່ງພົ້ນຈາກກົດບັນຍັດຕ່າງໆ ຄືກົດຂອງວັນເດືອນປີທີ່ຊາວເຮັບເຣີໄດ້ປະຕິບັດກັນມາແຕ່ສມັຍບູຮານພຸ້ນ.

ງ. ກົດຣະບຽບຕ່າງໆແມ່ນແນໃສ່ພຣະເຢຊູຄຣິດ ເມື່ອພຣະເຢຊູຄຣິດມາແລ້ວກົດນັ້ນກໍໝົດໄປ.

*ດຣ. ທຸນພັນ ວົງສຸຣິດທ໌*